ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນລວມກິດຈະການ

ວັນທີ 31 ທັນວາ 2015

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປຂອງທະນາຄານ	1 - 4
ບົດລາຍງານຂອງນັກກວດສອບອິດສະຫຼະ	5 - 6
ໃບລາຍງານຜົນໄດ້ຮັບໃນການທຸລະກິດລວມກິດຈະການ	7
ໃບລາຍງານຜົນໄດ້ຮັບນອກການທຸລະກິດລວມກິດຈະການ	8
ໃບລາຍງານຖານະການເງິນລວມກິດຈະການ	9 - 10
ໃບລາຍງານສ່ວນປ່ຽນແປງທຶນຕົນເອງລວມກິດຈະການ	11 - 12
ໃບລາຍງານກະແສເງິນສົດລວມກິດຈະການ	13 - 14
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ	15 – 58

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນທົ່ວໄປຂອງທະນາຄານ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນເອກະສານລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບ ມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບ ອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບ ອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດ ຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນ ທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມື ຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2015 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	95,604,321	70%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ)	13,657,760	10%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	13,657,759	10%
ນັກລົງທຶນຕ່າງປະເທດ	13,657,760	10%
	136,577,600	**100%**

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດ ໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງ ເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດ ຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2015 ແມ່ນ 682,888 ລ້ານກີບ. (ນະວັນທີ 31 ທັນວາ 2014 : 682,888 ລ້ານກີບ)

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2015 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ເຈັດສິບເຈັດ (77) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນທົ່ວໄປຂອງທະນາຄານ (ຕໍ່)

ທະນາຄານ (ຕໍ່)

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2015 ທະນາຄານມີ ສອງ (01) ບໍລິສັດໃນເຄືອຄື:

ຊື່	ໃບທະບຽນວິສາຫະກິດ	ຂະແໜງ ການ	% ຮຸ້ນຂອງ ທະນາຄານ
ບໍລິສັດຫລັກຊັບ ທຄຕລ-ການ ຈຳກັດ	ເລກທີ 180/10 ລົງວັນທີ 14 ທັນວາ 2010 ໂດຍ ກົມ ສົ່ງເສີມການລົງທຶນຂອງກະຊວງ ແຜນການ ແລະ ການລົງທຶນຂອງ ສປປ ລາວ	ຫຼັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2015, ທະນາຄານມີ ສາມ (04) ບໍລິສັດຮ່ວມທຶນຄື:

ຊື່	ໃບທະບຽນວິສາຫະກິດ	ຂະແໜງ ການ	% ຮຸ້ນຂອງ ທະນາຄານ
ທະນາຄານຮ່ວມ ທຸລະກິດ ລາວ-ຫວຽດ	ເລກທີ 232/11 ລົງວັນທີ 8 ກັນຍາ 2011 ໂດຍ ທະນາຄານແຫ່ງ ສປປ ລາວ.	ການທະນາ ຄານ & ການເງິນ	25%
ທະນາຄານລາວ- ຝຣັ່ງ ຈຳກັດ	ເລກທີ 121-09/MPI ລົງວັນທີ 26 ສິງຫາ 2009 ໂດຍກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ການທະນາ ຄານ & ການເງິນ	46%
ບໍລິສັດປະກັນໄພ ລາວ-ຫວຽດ	ເລກທີ 077/08 /FIMC ລົງວັນທີ 09 ມີຖຸນາ 2008 ໂດຍ ຄະນະກຳມະການລົງທຶນ ຕ່າງປະເທດ ຂອງ ສປປ ລາວ.	ປະກັນໄພ	35%
ທະນາຄານ ລາວ-ຈີນ ຈຳກັດ	ເລກທີ 041/ERM ລົງວັນທີ 27 ມັງກອນ 2014 ໂດຍ ພະແນກທະບຽນວິສາຫະກິດ ຂອງ ສປປ ລາວ.	ການທະນາ ຄານ & ການເງິນ	49%

ທະນາຄານ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ຮອດວັນທີ 31 ທັນວາ 2015 ແລະ ນະວັນທີ ທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ແຕ່ງຕັ້ງຄືນ/ລາອອກ*
ທ່ານ ບຸນເຫຼືອ ສີນໄຊວໍລະວົງ	ປະທານ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ສາຍສະໝອນ ໄຊຊຸລຽນ	ປະທານ	ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 09 ເມສາ 2015
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງຄືນ ວັນທີ 09 ເມສາ 2015
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນ ວັນທີ 09 ເມສາ 2015
ທ່ານ ພັນຊະນະ ຄຸນນຸວົງ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ມາກ ໂຮເບີດ	ສະມາຊິກ	ແຕ່ງຕັ້ງຄືນ ວັນທີ 09 ເມສາ 2015
ທ່ານ ວຽງໄຊ ຈັນທະວິສຸກ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ວັນຄຳ ວໍລະວົງ	ສະມາຊິກ	ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 09 ເມສາ 2015

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການ ຮອດວັນທີ 31 ທັນວາ 2015 ແລະ ນະວັນທີ ທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ແຕ່ງຕັ້ງຄືນ/ລາອອກ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 15 ມັງກອນ 2016 (*)
ທ່ານ ວັນຄຳ ວໍຣະວົງ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 13 ມັງກອນ 2012 ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 16 ກຸມພາ 2015
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015

(*) ທ່ານ ພູຂົງ ຈັນທະຈັກ ໄດ້ຮັບການແຕ່ງຕັ້ງເປັນ ຮັກສາການຜູ້ອຳນວຍການໃຫຍ່ ໃນວັນທີ 17 ກຸມພາ 2015 ແລະ ຕໍ່ມາໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການເປັນ ຜູ້ອຳນວຍການໃຫຍ່ ໃນວັນທີ 15 ມັງກອນ 2016.

ທະນາຄານ (ຕໍ່)

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນຊ່ວງໄລຍະ ວັນທີ 01 ມັງກອນ 2015 ເຖິງ ວັນທີ 16 ກຸມພາ 2015 ແມ່ນທ່ານ ວັນ ຄຳ ວໍຣະວົງ - ຜູ້ອຳນວຍການໃຫຍ່.

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນຊ່ວງໄລຍະ ວັນທີ 17 ກຸມພາ 2015 ເຖິງ ວັນທີ 14 ມັງກອນ 2016 ແມ່ນທ່ານ ພູ ຂົງ ຈັນທະຈັກ - ຮັກສາການຜູ້ອຳນວຍການໃຫຍ່.

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນຊ່ວງໄລຍະ ວັນທີ 15 ມັງກອນ 2016 ເຖິງ ນະມື້ອອກເອກະສານລາຍງານການເງິນ ສະບັບນີ້ ແມ່ນທ່ານ ພູຂົງ ຈັນທະຈັກ - ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງທະນາຄານແມ່ນບໍລິສັດ ເອີນ ແອນ ຢັງລາວ ຈຳກັດ.

Ernst & Young Lao Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 60790273/17968118IFRS-CS

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ຜູ້ຖືຮຸ້ນຂອງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ທີ່ນັບຖື,

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນລວມກິດຈະການຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ"), ເຊິ່ງມີຢູ່ໃນໜ້າທີ 7 ຫາ 58 ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນລວມກິດຈະການ ນະວັນທີ 31 ທັນວາ 2015, ໃບລາຍງານຜົນໄດ້ຮັບລວມກິດຈະການ, ໃບລາຍງານຜົນໄດ້ຮັບນອກການທຸລະກິດລວມກິດຈະການ, ໃບລາຍງານກະແສເງິນສິດລວມກິດຈະການ ແລະ ໃບລາຍງານສ່ວນປ່ຽນແປງຂອງທຶນລວມກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນສະບັບລວມກິດຈະການ

ຄະນະອຳນວຍການທະນາຄານແມ່ນມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນລວມກິດຈະການສະບັບນີ້ຢ່າງຖືກຕ້ອງໂດຍອີງຕາມມາດຕະຖານສາກົນດ້ານການລາຍງານການເງິນ ແລະ ຮັບຜິດຊອບການຄຸ້ມຄອງພາຍໃນຂອງທະນາຄານທີ່ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນລວມກິດຈະການສະບັບນີ້ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດທີ່ໃຫຍ່ຫຼວງທີ່ອາດຈະເກີດຈາກການສໍ້ໂກງ ຫລື ຂໍ້ຜິດພາດ.

ຄວາມຮັບຜິດຊອບຂອງນັກກວດສອບ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນອອກຄຳເຫັນຕໍ່ເອກະສານລາຍງານການເງິນລວມກິດຈະການ ໂດຍອີງຕາມຜົນການກວດສອບຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍອີງຕາມມາດຕະຖານສາກົນດ້ານການກວດສອບ. ມາດຕະຖານດັ່ງກ່າວໄດ້ກຳນົດໃຫ້ພວກຂ້າພະເຈົ້າຕ້ອງປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ.

ການກວດສອບລວມມີຂັ້ນຕອນຕ່າງໆ ເພື່ອເກັບກຳຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ. ວິທີການທີ່ນຳໃຊ້ໃນການກວດສອບ ແມ່ນຂຶ້ນກັບການວິເຄາະຂອງນັກກວດສອບ ລວມເຖິງການປະເມີນລະດັບຄວາມສ່ຽງ ຂອງຂໍ້ຜິດພາດອັນໃຫ່ຍຫຼວງ ຂອງເອກະສານລາຍງານການເງິນບໍ່ວ່າຈະແມ່ນຍ້ອນການສໍ້ໂກງ ຫລື ຄວາມຜິດພາດຕ່າງໆ. ໃນການປະເມີນຄວາມສ່ຽງດັ່ງກ່າວ, ນັກກວດສອບຈະພິຈາລະນາບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນຂອງທະນາຄານ ເພື່ອອອກແບບຂັ້ນຕອນໃນການການກວດສອບໃຫ້ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການອອກຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ. ການກວດສອບນີ້ ຍັງລວມການປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນຳໃຊ້ຢູ່, ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີທີ່ຄະນະອຳນວຍການອ້າງອອກ, ພ້ອມກັນນັ້ນກໍ່ຍັງປະເມີນພາບລວມຂອງການນຳສະເໜີເອກະສານລາຍງານການເງິນອີກດ້ວຍ.

ພວກຂ້າພະເຈົ້າເຊື່ອວ່າຫຼັກຖານທີ່ໄດ້ມາຈາກການກວດສອບນັ້ນແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນແບບມີເງື່ອນໄຂຂອງພວກຂ້າພະເຈົ້າ.

EY
Building a better working world

ພື້ນຖານໃນການອອກຄຳເຫັນແບບມີເງື່ອນໄຂ

ເນື່ອງຈາກມີຂໍ້ກຳຈັດທາງດ້ານຂໍ້ມູນ. ສະນັ້ນ, ທາງຄະນະອຳນວຍການຂອງທະນາຄານຍັງບໍ່ສາມາດສະໜອງຂໍ້ມູນ ເພື່ອເປີດເຜີຍກ່ຽວກັບມູນຄ່າຍຸດຕິທຳ ແລະ ການບໍລິຫານຄວາມສ່ຽງທາງການເງິນໄດ້ກຳນົດໄວ້ພາຍໃຕ້ມາດຕະຖານຂອງ IFRS ເລກທີ 7- "ເຄື່ອງມືທາງການເງິນ: ການເປີດເຜີຍຂໍ້ມູນ" ແລະ IFRS ເລກທີ 13: "ການຕີມູນຄ່າຍຸດຕິທຳ".

ຄຳເຫັນ

ໃນຄຳເຫັນຂອງພວກຂ້າພະເຈົ້າ, ນອກຈາກຜົນກະທົບຂອງບັນຫາທີ່ລະບຸໄວ້ໃນວັກ ພື້ນຖານໃນການອອກຄຳເຫັນແບບມີເງື່ອນໄຂ ຂ້າງເທິງນີ້, ພວກຂ້າພະເຈົ້າເຫັນວ່າເອກະສານລາຍງານການເງິນສະບັບນີ້ໄດ້ສະແດງພາບພິດອັນຖືກຕ້ອງ ແລະ ເໝາະສົມຂອງຖານະການເງິນລວມກິດຈະການຂອງທະນາຄານ ນະວັນທີ 31 ທັນວາ 2015 ລວມທັງ ຜົນປະກອບການລວມກິດຈະການ ແລະ ໃບລາຍງານກະແສເງິນສົດລວມກິດຈະການ ສຳລັບປີທີ່ສິ້ນສຸດວັນດັ່ງກ່າວ ໂດຍສອດຄ່ອງຕາມມາດຕະຖານສາກົນດ້ານການລາຍງານການເງິນ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ບົດອະທິບາຍຊ້ອນທ້າຍເລກທີ 31 ກ່ຽວກັບການຂາຍສິດນຳໃຊ້ທີ່ດິນ 36 ຕອນ ຂອງທະນາຄານໃຫ້ທະນາຄານແຫ່ງ ສປປ ລາວ. ລາຄາຂາຍແມ່ນອີງຕາມການຕີມູນຄ່າເໝາະສົມຂອງທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ.

Ernst & Young Lao Co., Ltd.

ນະຄອນຫລວງວຽງຈັນ, ສປປ ລາວ

31 ມີນາ 2016

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບໃນການທຸລະກິດລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

	ບົດອະທິບາຍ ເລກທີ	2015 ລ້ານກີບ	2014 ລ້ານກີບ
ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	3	1,073,610	1,003,754
ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	4	(812,970)	(689,609)
ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ		**260,640**	**314,145**
ລາຍຮັບຄ່າທຳນຽມ ຄ່າບໍລິການ	5	171,548	142,810
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	5	(13,314)	(11,531)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**5**	**158,234**	**131,279**
ລາຍຮັບສຸດທິຈາກການຄ້າ	6	(246,883)	88,185
ລາຍຮັບອື່ນໆຈາກການດຳເນີນງານ	7	422,260	18,229
ລາຍຮັບທັງໝົດຈາກການດຳເນີນງານ		**594,251**	**551,838**
ລາຍຈ່າຍສຳລັບການຂາດທຶນສິນເຊື່ອຂອງເງິນກູ້ທີ່ໃຫ້ກັບທະນາຄານ ແລະ ລູກຄ້າ	14	(114,455)	(115,365)
ເກັບຄືນການເຊື່ອມຄ່າຂອງການລົງທຶນທາງການເງິນ	8	1,837	27,237
ເກັບຄືນການເຊື່ອມຄ່າຂອງຊັບສິນອື່ນໆ		-	6,445
ລາຍຮັບສຸດທິຈາກການດຳເນີນງານ		**481,633**	**470,155**
ລາຍຈ່າຍພະນັກງານ	9	(220,719)	(212,933)
ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມ	18,19	(64,465)	(58,861)
ລາຍຈ່າຍອື່ນໆການດຳເນີນງານ	10	(97,685)	(85,374)
ລາຍຈ່າຍທັງໝົດຈາກການດຳເນີນງານ		**(382,869)**	**(357,168)**
ສ່ວນກຳໄລ ແລະ ຂາດທຶນຂອງບໍລິສັດຮ່ວມທຶນ	17	48,325	43,146
ກຳໄລກ່ອນອາກອນ		**147,089**	**156,133**
ລາຍຈ່າຍອາກອນກຳໄລໃນປີ	24.1	(24,327)	(26,593)
ລາຍຮັບອາກອນກຳໄລເຍື່ອນຊຳລະ	24.1	1,950	3,788
ກຳໄລຫຼັງອາກອນ		**124,712**	**133,328**
ສ່ວນທີ່ເປັນ:			
ຜູ້ຖືຮຸ້ນຂອງທະນາຄານແມ່		124,371	132,610
ສ່ວນໄດ້ເສຍທີ່ບໍ່ມີການຄວບຄຸມ		341	718
ລາຍໄດ້ຕໍ່ຮຸ້ນ	**35**	**911**	**971**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ວ່າການຫົວໜ້າພະແນກການຄ້າພາຍໃນ

ອະນຸມັດໂດຍ:

ທ່ານ ພັນຊະນະ ຄຸນນຸວົງ
ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2016

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບນອກການທຸລະກິດລວມກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

	ບົດອະທິບາຍ ເລກທີ	*2015 ລ້ານກີບ*	*2014 ລ້ານກີບ*
ກຳໄລສຸດທິພາຍໃນປີ		**124,712**	**133,328**
ລາຍຮັບອື່ນໆນອກການທຸລະກິດ			
ກຳໄລ ສຸດທິຈາກການລົງທຶນໃນຫຼັກຊັບມີໄວ້ເພື່ອຂາຍ		(35,708)	32,293
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ		4,627	(6,136)
ກຳໄລສຸດທິຈາກຊັບສິນທາງການເງິນທີ່ມີໄວ້ເພື່ອຂາຍໃນຮຸ້ນຂອງບໍລິສັດ ຮ່ວມທຶນ		-	272
ລາຍຮັບອື່ນໆນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**(31,081)**	**26,429**
ລວມລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**93,631**	**159,757**
ສ່ວນທີ່ເປັນ:			
ຜູ້ຖືຮຸ້ນຂອງທະນາຄານແມ່		93,290	159,039
ສ່ວນໄດ້ເສຍທີ່ບໍ່ມີການຄວບຄຸມ		341	718

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ອຳນວຍການຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ພັນຊະນະ ຄຸນນຸວົງ
ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2016

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ

ນະວັນທີ 31 ທັນວາ 2015

	ບົດອະທິບາຍ ເລກທີ	*31 ທັນວາ 2015 ລ້ານກີບ*	*31 ທັນວາ 2014 ລ້ານກີບ*
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	11	9,466,790	7,271,254
ເງິນຝາກຢູ່ທະນາຄານອື່ນ	12	1,986,635	3,774,198
ເງິນກູ້ໃຫ້ແກ່ລູກຄ້າ	13	10,854,955	9,622,905
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຊື້ຂາຍ		6,046	3,906
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	15	224,348	222,332
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	16	1,776,408	1,266,732
ການລົງທຶນໃນບັນດາ ບໍລິສັດຮ່ວມທຶນ	17	555,418	534,430
ຊັບສິນບັດຄົງທີ່ ແລະ ອຸປະກອນ	18	391,146	250,393
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	19	297,744	271,569
ຊັບສິນອາກອນເຍື້ອນຊຳລະ	24.4	6,259	5,999
ຊັບສິນອື່ນໆ	20	211,111	265,441
ລວມຊັບສິນ		**25,776,860**	**23,489,159**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ	21	2,446,347	2,861,725
ໜີ້ຕ້ອງສົ່ງລູກຄ້າ	22	21,310,561	19,101,649
ກູ້ຢືມຈາກທະນາຄານ ອື່ນໆ	23	720,497	121,287
ໜີ້ສິນອາກອນໃນປີ	24.2	30,934	20,028
ໜີ້ສິນອາກອນເຍື້ອນຊຳລະ	24.4	11,077	17,394
ໜີ້ສິນອື່ນໆ	25	60,373	216,385
ລວມໜີ້ສິນ		**24,579,789**	**22,338,468**
ທຶນ			
ທຶນຈົດທະບຽນ	26	682,888	682,888
ຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ	27	314,898	279,157
ຄັງສຳຮອງສຳລັບຫຼັກຊັບມີໄວ້ເພື່ອຂາຍ	28	32,789	64,142
ຮຸ້ນທີ່ໄດ້ຊື້ຄືນ		(1,010)	(1,010)
ກຳໄລສະສົມ		134,263	92,612
		1,163,828	**1,117,789**
ສ່ວນໄດ້ເສຍທີ່ບໍ່ມີການຄວບຄຸມ		33,243	32,902
ລວມທຶນທັງໝົດ		**1,197,071**	**1,150,691**
ລວມໜີ້ສິນ ແລະ ທຶນ		**25,776,860**	**23,489,159**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ (ຕໍ່)

ນະອັນທີ 31 ທັນວາ 2015

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລໍາມະນີແສງ ໄຊຍະເພັດ	ທ່ານ ນ. ພູແສງທອງ ອານຸລັກຄໍາ	ທ່ານ ພັນຊະນະ ຄຸນນຸວົງ
ຫົວໜ້າພະແນກບັນຊີສັງລວມ	ວ່າການຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອໍານວຍການ

ນະຄອນຫລວງວຽງຈັນ, ສປປ ລາວ

31 ມີນາ 2016

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງລວມກິດຈະການ (ຕໍ່)

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

	ທຶນຈົດທະບຽນ ລ້ານກີບ	*ຄັງສຳຮອງຕາມ ລະບຽບການ ແລະ ຄັງສຳຮອງອື່ນໆ ລ້ານກີບ*	*ຮຸ້ນ ທີ່ໄດ້ຊື້ຄືນ ລ້ານກີບ*	*ຄັງສະສົມ-ຫລັກ ຊັບມີໄວ້ເພື່ອຂາຍ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ສ່ວນໄດ້ສ່ວນເສຍ ທີ່ບໍ່ມີການຄວບຄຸມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 31 ທັນວາ 2014	**682,888**	**279,157**	**(1,010)**	**64,142**	**92,612**	**32,902**	**1,150,691**
ໂອນເງິນປັນຜົນໃຫ້ຜູ້ຖືຮຸ້ນ	-	-	-	-	(55,534)	-	(55,534)
ກຳໄລສຸດທິໃນປີ 2015	-	-	-	-	124,371	341	124,712
ແບ່ງກຳໄລເຂົ້າຄັງສຳຮອງໃນປີ 2014 ອີງຕາມກຳໄລທີ່ໄດ້ລາຍງານ							
ກຳໄລພາຍໃຕ້ລະບົບການບັນຊີລາວ	-	35,741	-	-	(35,741)	-	-
ຄັດແກ້ເງິນປັນຜົນທີ່ບັນທຶກເກີນໃນປີ 2012	-	-	-	-	1,518	-	1,518
ຍົກເລີກຄັງແຮທີ່ບໍ່ຖືກນຳໃຊ້	-	-	-	-	6,336	-	6,336
ກຳໄລສຸດທິຈາກຊັບສິນທາງການເງິນທີ່ມີໄວ້ເພື່ອຂາຍໃນຮຸ້ນຂອງ							
ບໍລິສັດຮ່ວມທຶນ	-	-	-	(272)	-	-	(272)
ລາຍຮັບອື່ນໆນອກການທຸລະກິດ	-	-	-	(31,081)	-	-	(31,081)
ອື່ນໆ	-	-	-	-	701	-	701
ຍອດເຫຼືອ ນະວັນທີ 31 ທັນວາ 2015	**682,888**	**314,898**	**(1,010)**	**32,789**	**134,263**	**33,243**	**1,197,071**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ວ່າການຫົວໜ້າພະແນກການພາຍໃນ

ອະນຸມັດໂດຍ:

ທ່ານ ພັນຊະນະ ຄຸນນຸວົງ
ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2016

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

	ບົດອະທິບາຍ ເລກທີ	*2015 ລ້ານກີບ*	*2014 ລ້ານກີບ*
ການເຄື່ອນໄຫວດ້ານການດຳເນີນງານ			
ກຳໄລກ່ອນອາກອນ		147,089	156,133
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	18, 19	64,465	58,861
ລາຍຈ່າຍໜີ້ເສຍ ແລະ ຄ່າເຊື່ອມມູນຄ່າຂອງການລົງທຶນໃນຫຼັກຊັບ		112,618	81,683
ສ່ວນແບ່ງຈາກກຳໄລທີ່ບໍລິສັດຮ່ວມທຶນໄດ້ລົງທຶນໃນບໍລິສັດອື່ນ		(48,325)	(43,146)
ກຳໄລຈາກການສະສາງຊັບສິນ		(359,076)	-
ລາຍຮັບເງິນປັນຜົນ		(12,673)	(13,704)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**(95,902)**	**239,827**
ການປ່ຽນແປງຊັບສິນຈາກການດຳເນີນງານ			
ໜີ້ຕ້ອງຮັບຈາກທະນາຄານອື່ນ		(334,797)	234,833
ເງິນກູ້ໃຫ້ແກ່ລູກຄ້າ		(1,338,065)	(465,699)
ການລົງທຶນທາງການເງິນທີ່ຖືໄວ້ເພື່ອການຄ້າ		(2,140)	(3,443)
ການລົງທຶນທາງການເງິນທີ່ຖືໄວ້ເພື່ອການຂາຍ		(2,016)	(9,659)
ການລົງທຶນທາງການເງິນທີ່ຖືໄວ້ຈົນຄົບກຳນົດ		(507,839)	(582,936)
ຊັບສິນອື່ນໆ		54,422	139,046
ການປ່ຽນແປງໜີ້ສິນຈາກການດຳເນີນງານ			
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ ແລະ ທຫລ		183,832	1,795,478
ໜີ້ຕ້ອງສົ່ງໃຫ້ລູກຄ້າ		2,208,913	4,505,108
ໜີ້ສິນອື່ນໆ		(186,372)	168,351
ອາກອນກຳໄລໄດ້ຈ່າຍພາຍໃນໄລຍະ	24.3	(9,020)	(30,830)
ກະແສເງິນສົດສຸດທິ (ນຳໃຊ້ເຂົ້າໃນ)/ຈາກ ການດຳເນີນງານ		**(28,984)**	**5,990,076**
ການເຄື່ອນໄຫວດ້ານການລົງທຶນ			
ການຈັດຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່		(244,225)	(109,581)
ກຳໄລຈາກການຂາຍຊັບສິນບັດຄົງທີ່		371,908	1,265
ຈ່າຍສຸດທິສຳລັບລົງທຶນໃນນິຕິບຸກຄົນອື່ນ		-	(147,000)
ເງິນປັນຜົນທີ່ໄດ້ຮັບ		38,452	23,108
ກະແສເງິນສົດສຸດທິ ຈາກ/(ນຳໃຊ້ເຂົ້າໃນ) ກິດຈະກຳການລົງທຶນ		**166,135**	**(232,208)**
ການເຄື່ອນໄຫວທາງການເງິນ			
ໄດ້ຮັບຈາກການກູ້ຢືມ		-	62,472
ການຈ່າຍເງິນປັນຜົນ		(55,534)	(103,039)
ກະແສເງິນສົດສຸດທິທີ່ນຳໃຊ້ໃນການລົງທຶນ		**(55,534)**	**(40,567)**
(ຫຼຸດລົງ)/ເພີ່ມຂຶ້ນ ສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**81,617**	**5,717,301**
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ		**10,081,167**	**4,362,709**
ສ່ວນຜິດຕ່າງອັດຕາແລກປ່ຽນ		**(8,441)**	**1,157**
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ	**29**	**10,154,343**	**10,081,167**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ (ຕໍ່)

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີແສງ ໄຊຍະເພັດ	ທ່ານ ນ. ພູແສງທອງ ອານຸລັກຄຳ	ທ່ານ ພັນຊະນະ ຄຸນນຸວົງ
ຫົວໜ້າພະແນກບັນຊີສັງລວມ	ວ່າການຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ.

31 ມີນາ 2016

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ

ນະວັນທີ 31 ທັນວາ 2015 ແລະ ສຳລັບປີທີ່ສິ້ນສຸດໃນວັນທີດັ່ງກ່າວ

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນເອກະສານລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມສັນຍາການຊື້ຮຸ້ນສາມັນລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2015 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	95,604,321	70%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ)	13,657,760	10%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	13,657,759	10%
ນັກລົງທຶນຕ່າງປະເທດ	13,657,760	10%
	136,577,600	**100%**

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2015 ແມ່ນ 682,888 ລ້ານກີບ. (ນະວັນທີ 31 ທັນວາ 2014 : 682,888 ລ້ານກີບ);

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2015 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ເຈັດສິບເຈັດ (77) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2015, ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ບໍລິສັດຫລັກຊັບ ທຄຕລ-ກທ ຈຳກັດ	ເລກທີ 180 -10 ລົງວັນທີ 14 ທັນວາ 2010 ໂດຍກົມສົ່ງເສີມການລົງທຶນ ຂອງກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ຫລັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2015, ທະນາຄານມີ ສີ່ (04) ບໍລິສັດຮ່ວມທຶນຄື:

ຊື່	*ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ທະນາຄານຮ່ວມທຸລະກິດ ລາວ-ຫວຽດ	ເລກທີ 232/11 ລົງວັນທີ 08 ກັນຍາ 2011 ໂດຍ ທະນາຄານແຫ່ງ ສປປ ລາວ.	ການທະນາຄານ & ການເງິນ	25%
ທະນາຄານລາວ-ຝຣັ່ງ	121-09/ຜທ ລົງວັນທີ 26 ສິງຫາ 2009 ໂດຍ ກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ການທະນາຄານ & ການເງິນ	46%
ບໍລິສັດປະກັນໄພ ລາວ-ຫວຽດ	ເລກທີ 077/08/FIMC ລົງວັນທີ 09 ມິຖຸນາ 2008 ໂດຍ ຄະນະກຳມະການລົງທຶນ ຕ່າງປະເທດ ຂອງສປປ ລາວ.	ປະກັນໄພ	35%
ທະນາຄານ ລາວ-ຈີນ ຈຳກັດ	ເລກທີ 041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກທະບຽນວິສາຫະກິດ ຂອງ ສປປ ລາວ.	ການທະນຄານ & ການເງິນ	49%

1. **ຂໍ້ມູນກ່ຽວກັບທະນາຄານ** (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ຮອດວັນທີ 31 ທັນວາ 2015 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີແຕ່ງຕັ້ງຄືນ/ລາອອກ*
ທ່ານ ບຸນເຫຼືອ ສິນໄຊວໍລະວົງ	ປະທານ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ສາຍສະໝອນ ໄຊຊຸລຽນ	ປະທານ	ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 09 ເມສາ 2015
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງຄືນ ວັນທີ 09 ເມສາ 2015
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນ ວັນທີ 09 ເມສາ 2015
ທ່ານ ພັນຊະນະ ຄຸນນຸວົງ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ມາກ ໂຣເບີດ	ສະມາຊິກ	ແຕ່ງຕັ້ງຄືນ ວັນທີ 09 ເມສາ 2015
ທ່ານ ວຽງໄຊ ຈັນທະວິສຸກ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ວັນຄຳ ວໍລະວົງ	ສະມາຊິກ	ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 09 ເມສາ 2015

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ນະວັນທີ 31 ທັນວາ 2015 ແລະ ນະວັນທີທີ່ອອກເອກະສານລາຍງານ ສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 15 ມັງກອນ 2016 (*)
ທ່ານ ວັນຄຳ ວໍຣະວົງ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 13 ມັງກອນ 2012 ຍ້າຍອອກໄປຮັບໜ້າທີ່ໃໝ່ ວັນທີ 16 ກຸມພາ 2015
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015

(*) ທ່ານ ພູຂົງ ຈັນທະຈັກ ໄດ້ຮັບການແຕ່ງຕັ້ງເປັນ ຮັກສາການຜູ້ອຳນວຍການໃຫຍ່ ໃນວັນທີ 17 ກຸມພາ 2015 ແລະ ຕໍ່ມາ ໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການເປັນ ຜູ້ອຳນວຍການໃຫຍ່ ໃນວັນທີ 15 ມັງກອນ 2016.

ພະນັກງານ

ຈຳນວນພະນັກງານຂອງທະນາຄານນະວັນທີ 31 ທັນວາ 2015 ແມ່ນ 1,548 ຄົນ (ຈຳນວນພະນັກງານຂອງທະນາຄານນະວັນທີ 31 ທັນວາ 2014 ແມ່ນ 1,497 ຄົນ).

2. ນະໂຍບາຍການບັນຊີ

2.1 ພື້ນຖານການກະກຽມ

ທະນາຄານສ້າງເອກະສານລາຍງານການເງິນລວມກິດຈະການ ສຳລັບປີທີ່ສິ້ນສຸດວັນທີ ອີງຕາມມາດຕະຖານສາກົນດ້ານການລາຍງານການເງິນ ("IFRS"). ເອກະສານລາຍງານການເງິນລວມກິດຈະການໄດ້ຖືກສ້າງຂຶ້ນບົນພື້ນຖານຄວາມຕໍ່ເນື່ອງຂອງຂໍ້ມູນ, ເວັ້ນແຕ່ໄດ້ເປີດເຜີຍຢູ່ໃນບົດອະທິບາຍຊ້ອນທ້າຍເລກທີໃດໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

ທະນາຄານຮັກສາການບັນທຶກບັນຊີເປັນເງິນກີບ ("ກີບ") ເຊິ່ງເປັນສະກຸນ ເງິນຫລັກຂອງທະນາຄານ ແລະ ໄດ້ສ້າງເອກະສານລາຍງານການເງິນລວມກິດຈະການເປັນຫົວໜ່ວຍລ້ານກີບ.

ທະນາຄານໄດ້ສ້າງ ແລະ ອອກເອກະສານລາຍງານການເງິນສະເພາະກິດຈະການຕາມ IFRS ລົງວັນທີ 31 ມີນາ 2016.

2.2 ປີການບັນຊີ

ປີການບັນຊີຂອງທະນາຄານແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ 31 ທັນວາ.

2.3 ການນຳສະເໜີເອກະສານລາຍງານການເງິນລວມກິດຈະການ

ທະນາຄານນຳສະເໜີເອກະສານລາຍງານຖານະການເງິນຂອງຕົນເອງຕໍ່ສາທາລະນະຕາມຄວາມຕ້ອງການຂອງມະຫາຊົນ. ຊັບສິນການເງິນ ແລະ ໜີ້ສິນການເງິນ ແມ່ນຖືກຫັກລົບກັນ ແລະ ມູນຄ່າຍັງເຫລືອຫລັງຈາກລົບກັນແລ້ວຈະຖືກລາຍງານໃນໃບລາຍງານຖານະການເງິນລວມກິດຈະການ, ຖ້າຫາກວ່າທະນາຄານຖືກບັງຄັບທາງກົດໝາຍໃຫ້ຊຳລະສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງຈຳນວນເງິນສຸດທິ ຫລື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ບັນດາລາຍຮັບ ແລະ ລາຍຈ່າຍຈະບໍ່ຖືກຫັກອອກໃນໃບລາຍງານຜົນໄດ້ຮັບ ຈົນກວ່າຈະມີກິດລະບຽບ ຫລື ຖືກຮຽກຮ້ອງໂດຍມາດຕະຖານການບັນຊີ ຫລື ການແປຄວາມໝາຍ, ໂດຍສະເພາະແມ່ນຕ້ອງໄດ້ລະບຸຢູ່ໃນນະໂຍບາຍການບັນຊີຂອງທະນາຄານ.

2.4 ພື້ນຖານການລວມກິດຈະການ

ເອກະສານລາຍງານການເງິນລວມກິດຈະການ ປະກອບມີ ເອກະສານລາຍງານການເງິນຂອງທະນາຄານ ແລະ ບໍລິສັດໃນເຄືອ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015. ເອກະສານລາຍງານການເງິນຂອງບໍລິສັດໃນເຄືອ ແມ່ນໄດ້ຖືກກະກຽມສຳລັບໄລຍະປີການບັນຊີປີດຽວກັນກັບໄລຍະການບັນຊີຂອງທະນາຄານ ໂດຍນຳໃຊ້ນັບດາຫຼັກການບັນຊີທີ່ສອດຄ່ອງກັນ.

ຍອດເຫຼືອພາຍໃນກຸ່ມ, ລາຍການເຄື່ອນໄຫວ, ລາຍຮັບ ແລະ ລາຍຈ່າຍທີ່ພົວພັນກັນພາຍໃນ ໄດ້ຕັດອອກເຕັມມູນຄ່າ.

ບັນດາບໍລິສັດໃນເຄືອ ແມ່ນໄດ້ຖືກສັງລວມເຂົ້າກັບທະນາຄານນັບຕັ້ງແຕ່ວັນທີທີ່ການຄວບຄຸມໄດ້ໂອນມາໃຫ້ແກ່ທະນາຄານ. ການຄວບຄຸມ ແມ່ນໄດ້ຮັບເມື່ອທະນາຄານໄດ້ມີອຳນາດໃນການບໍລິຫານບໍ່ວ່າທາງກົງ ຫຼື ທາງອ້ອມ ຕໍ່ກັບນະໂຍບາຍທາງການເງິນ ແລະ ການດຳເນີນງານຂອງບໍລິສັດດັ່ງກ່າວ ລວມທັງການໄດ້ຮັບຜົນປະໂຫຍດຈາກບັນດາບໍລິສັດເຫຼົ່ານັ້ນ.

2. ນະໂຍບາຍການບັນຊີ (ຕໍ່)

2.4 ພື້ນຖານການລວມກິດຈະການ (ຕໍ່)

ສ່ວນໄດ້ສ່ວນເສຍທີ່ບໍ່ມີການຄວບຄຸມ ສະແດງເຖິງອັດຕາສ່ວນຂອງກຳໄລ ແລະ ຂາດທຶນ ພ້ອມທັງຊັບສິນສຸດທິທີ່ບໍ່ໄດ້ຖືກຳມະສິດໂດຍທະນາຄານ ບໍ່ວ່າທາງກົງ ຫຼື ທາງອ້ອມ ຜ່ານບັນດາບໍລິສັດໃນເຄືອ ແມ່ນໄດ້ຖືກສະແດງແຍກຕ່າງຫາກ ໃນໃບລາຍງານຜົນໄດ້ຮັບສັງລວມກິດຈະການ ແລະ ທຶນ ໃນໃບສະຫຼຸບຊັບສິນບັດສັງລວມກິດຈະການ, ແຍກຈາກທຶນຂອງທະນາຄານ. ສູນເສຍສິ່ງໃດໆທີ່ບໍ່ກ່ຽວຂ້ອງກັບຜົນປະໂຫຍດສ່ວນໜ້ອຍທີ່ບໍ່ໄດ້ຮັບການຈັດສັນໃຫ້ກັບຜົນປະໂຫຍດສ່ວນໜ້ອຍເຖິງຈະສິ່ງຜົນໃຫ້ຍອດຂາດດຸນ. ຜົນປະໂຫຍດສ່ວນໜ້ອຍໄດ້ບັນທຶກບັນຊີໂດຍນຳໃຊ້ການຂະຫຍາຍກິດຈະການດ້ວຍເຫດນີ້ ຄວາມແຕກຕ່າງລະຫວ່າງ ການພິຈາລະນາ ແລະ ມູນຄ່າຍຸດຕິທຳຂອງຮຸ້ນຂອງຊັບສິນທີ່ໄດ້ຮັບການຍອມຮັບໃນຖານະຜູ່ຖືຮຸ້ນ.

2.5 ການພິຈາລະນາການບັນຊີທີ່ສຳຄັນ, ການຄາດຄະເນ ແລະ ຂໍ້ສົມມຸດຖານ

ໃນການກະກຽມສ້າງເອກະສານລາຍງານການເງິນສັງລວມກິດຈະການຂອງທະນາຄານ, ຄະນະຜູ່ບໍລິຫານຂອງທະນາຄານຖືກຮຽກຮ້ອງໃຫ້ນຳໃຊ້ການພິຈາລະນາຢ່າງສົມເຫດສົມຜົນ, ການຄາດຄະເນ ແລະ ການສົມມຸດຕິຖານວ່າບັນດາຕົວເລກທີ່ຖືກລາຍງານນັ້ນມີຜົນກະທົບຕໍ່ລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ, ແລະ ການເປີດເຜີຍ, ເຊັ່ນດຽວກັນກັບການເປີດເຜີຍບັນດາໜີ້ສິນທີ່ອາດເກີດເນື່ອງຈາກຄວາມບໍ່ແນ່ນອນຂອງການສົມມຸດຕິຖານ ແລະ ການຄາດຄະເນອາດຈະເຮັດໃຫ້ມີການດັດແກ້ບັນດາຍອດຍົກມາຂອງຊັບສິນ ແລະ ໜີ້ສິນ ເຊິ່ງອາດຈະກະທົບຕໍ່ຕົວເລກໃນອະນາຄົດ.

ບັນດາສົມມຸດຖານທີ່ສຳຄັນກ່ຽວກັບອານາຄົດ ແລະ ແຫຼ່ງຂໍ້ມູນອື່ນໆທີ່ສຳຄັນ ທີ່ມີຄວາມບໍ່ແນ່ນອນ ນະວັນທີຂອງປົດລາຍລາຍງານເງິນ ເຊິ່ງຖືວ່າມີຄວາມສ່ຽງທີ່ສຳຄັນທີ່ຈະກໍ່ໃຫ້ເກີດການດັດແກ້ມູນຄ່າທີ່ຍັງເຫຼືອຕາມບັນຊີຂອງຊັບສິນ ແລະ ໜີ້ສິນ ພາຍໃນປີການບັນຊີຕໍ່ໄປ ແມ່ນມີດັ່ງນີ້. ທະນາຄານໄດ້ອີງໃສ່ສົມມຸດຖານ ແລະ ການຄາດຄະເນ ທີ່ສາມາດຊອກຫາໄດ້ ນະເວລາທີ່ກະກຽມເອກະສານລາຍງານການເງິນ. ເຖິງຢ່າງໃດກໍ່ຕາມ, ບັນດາຂໍ້ສົມມຸດຖານ ແລະ ການຄາດຄະເນທີ່ຈະສິ່ງຜົນໃຫ້ມີການປ່ຽນແປງໃນອະນາຄົດເຫຼົ່ານີ້ ອາດຈະມີການປ່ຽນແປງ ເນື່ອງຈາກການປ່ຽນແປງຂອງຕະຫລາດ ແລະ ສະຖານະການໃດໜຶ່ງທີ່ຢູ່ເໜືອການຄວບຄຸມຂອງທະນາຄານ, ເຊິ່ງບັນດາການປ່ຽນແປງເຫຼົ່ານີ້ ໄດ້ສະແດງໃນຂໍ້ສົມມຸດຖານເມື່ອເກີດຂຶ້ນຈິງ.

(i) ຄວາມສືບເນື່ອງໃນການດຳເນີນທຸລະກິດ

ຄະນະອຳນວຍການຂອງທະນາຄານ ໄດ້ປະເມີນຄວາມອາດສາມາດຂອງທະນາຄານເພື່ອສືບຕໍ່ໃນການດຳເນີນທຸລະກິດ ແລະ ມີຄວາມເຊື່ອໝ່ັນໃຈວ່າທະນາຄານມີແຫລ່ງຊັບພະຍາກອນທີ່ຈະສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດທີ່ຄາດຄະເນໄດ້. ນອກຈາກນີ້, ຄະນະອຳນວຍການຍັງບໍ່ຮັບຮູ້ເຖິງຄວາມເປັນໄປໄດ້ທີ່ອາດຈະສິ່ງຜົນກະທົບທີ່ສຳຄັນ ຕໍ່ຄວາມສາມາດໃນການດຳເນີນທຸລະກິດຢ່າງຕໍ່ເນື່ອງ. ດັ່ງນັ້ນ, ເອກະສານລາຍງານການເງິນລວມກິດຈະການຍັງສືບຕໍ່ຖືກກະກຽມບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

(ii) ການເຊື່ອມຄ່າຂອງເງິນກູ້

ທະນາຄານໄດ້ທົບທວນຄືນບັນດາເງິນກູ້ ທີ່ປ່ອຍໃຫ້ລູກຄ້າສຳລັບບັນດາລາຍການທີ່ມີມູນຄ່າໃຫ່ຍເປັນລາຍບຸກຄົນ ນະວັນທີຂອງເອກະສານລາຍງານການເງິນເພື່ອປະເມີນວ່າສິ່ມຄວນຖືກບັນທຶກມູນຄ່າເຊື່ອມລົງໃນໃບລາຍງານຜົນໄດ້ຮັບ ຫຼື ບໍ່. ໂດຍສະເພາະແລ້ວຜູ່ບໍລິຫານຕ້ອງໄດ້ພິຈາລະນາຄາດຄະເນຈຳນວນ ແລະ ໄລຍະເວລາຂອງກະແສເງິນສົດໃນອະນາຄົດເມື່ອກຳນົດມູນຄ່າເຊື່ອມ. ໃນການປະເມີນກະແສເງິນສົດ ທະນາຄານໄດ້ພິຈາລະນາອີງໃສ່ຂໍ້ສົມມຸດຖານຂອງບັນດາເງື່ອນໄຂ ແລະ ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງ ເຊິ່ງຈະເປັນຜົນໃຫ້ມີການປ່ຽນແປງຄ່າເຊື່ອມໃນອານາຄົດ.

2. ນະໂຍບາຍການບັນຊີ (ຕໍ່)

2.5 ການພິຈາລະນາການບັນຊີທີ່ສຳຄັນ, ການຄາດຄະເນ ແລະ ຂໍ້ສົມມຸດຖານ (ຕໍ່)

(ii) ການເຊື່ອມຄ່າຂອງເງິນກູ້ (ຕໍ່)

ບັນດາລາຍການເງິນກູ້ໃຫ້ລູກຄ້າລາຍບຸກຄົນທີ່ຖືກປະເມີນແລ້ວ ເຫັນວ່າຈະບໍ່ມີການເຊື່ອມຄ່າ ຈະຖືກຈັດເຂົ້າກັບບັນດາເງິນກູ້ລາຍການອື່ນໆທີ່ເປັນລາຍການຍ່ອຍ ອີງຕາມປະເພດຂອງກຸ່ມຊັບສິນທີ່ມີຄວາມສ່ຽງໃນລັກສະນະຄ້າຍຄືກັນ ເພື່ອປະເມີນຄ່າເຊື່ອມແບບເປັນກຸ່ມ, ເພື່ອກຳນົດວ່າສົມຄວນສ້າງເງິນແຮ ຫຼື ບໍ່ ເພື່ອກໍລະນີເກີດການຂາດທຶນ ເຖິງແມ່ນວ່າບັນດາຫຼັກຖານຢັ້ງຢືນຂອງການເຊື່ອມຄ່າຍັງບໍ່ທັນຈະແຈ້ງກໍ່ຕາມ.

(iii) ການເຊື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານໄດ້ບັນທຶກຄ່າເຊື່ອມມູນຄ່າຕໍ່ການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສຳຄັນ ຫຼື ການຫຼຸດລົງທີ່ຍືດເຍື້ອໃນມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນ ຂໍ້ກຳນົດທີ່ "ສຳຄັນ" ຫຼື "ຍາວນານ" ຕ້ອງຖືກພິຈາລະນາ, ການພິຈາລະນາດັ່ງກ່າວນີ້ ທະນາຄານປະເມີນລະຫວ່າງຫຼາຍປັດໃຈ ແລະ ປະຫວັດການໝັ້ງຕົ້ງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນ.

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ

2.6.1 ລາຍການທີ່ເປັນເງິນຕາຕ່າງປະເທດ

ລາຍການທີ່ເປັນເງິນຕາຕ່າງປະເທດໂດຍພື້ນຖານແມ່ນຖືກບັນທຶກໂດຍການນຳໃຊ້ອັດຕາແລກປ່ຽນທັນທີໃນມື້ທີ່ລາຍການດັ່ງກ່າວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນ ທາງການເງິນໄດ້ຄິດໄລ່ເປັນສະກຸນເງິນຕາຕ່າງປະເທດໃນທ້າຍປີ ແລະ ແລກປ່ຽນເປັນເງິນກີບດ້ວຍອັດຕາແລກປ່ຽນທັນທີໃນມື້ເຮັດ ບົດລາຍງານ (ເບິ່ງລາຍການອັດຕາແລກປ່ຽນຂອງເງິນຕາຕ່າງປະເທດຕໍ່ເງິນກີບ ໃນ ວັນທີ 31 ທັນວາ 2014 ແລະ ວັນທີ 31 ທັນວາ 2015 ໃນບົດອະທິບາຍຊ້ອນທ້າຍເລກທີ 37). ສ່ວນຜິດຕ່ຽງຈາກອັດຕາແລກປ່ຽນທີ່ເພີ່ມຂຶ້ນຈາກບັນດາຊັບສິນ ແລະ ໜີ້ສິນທີ່ຢູ່ໃນເອກະສານລາຍງານການເງິນລວມກິດຈະການແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ.

2.6.2 ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ

2.6.2.1 ວັນທີຂອງການຮັບຮູ້

ຊັບສິນ ແລະ ໜີ້ສິນການເງິນທັງໝົດ ທີ່ຖືກຮັບຮູ້ໃນເບື້ອງຕົ້ນໃນມື້ທີ່ຖືກຊື້ຂາຍເຊັ່ນ: ມື້ທີ່ທະນາຄານກາຍເປັນພາກສ່ວນໜຶ່ງຂອງການໃຫ້ຄຳໝັ້ນສັນຍາຫັກຄ່າເຊື່ອມຂອງເຄື່ອງມື. ນີ້ລວມທັງ "ວິທີການຄ້າປົກກະຕິ", ການຊື້ ຫລື ການຂາຍຂອງ ຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສິ່ງໃຫ້ທັນເວລາ ຫລື ຕາມສັນຍາໃນທ້ອງຕະຫລາດ.

2.6.2.2 ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ເບື້ອງຕົ້ນແມ່ນຂຶ້ນກັບຈຸດປະສົງ ແລະ ຄວາມຕັ້ງໃຈຂອງຜູ້ບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ ແລະ ຕາມລັກສະນະເດັ່ນຂອງເຄື່ອງມືເຫລົ່ານັ້ນ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າຍຸດຕິທຳເບື້ອງຕົ້ນ, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ຖືກບັນທຶກຕາມມູນຄ່າຍຸດຕິທຳໂດຍຜ່ານກຳໄລ ແລະ ຂາດທຶນ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.2 ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ (ຕໍ່)

2.6.2.3 ຊັບສິນທາງການເງິນ ຫລື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ

ຊັບສິນທາງການເງິນ ຫລື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ ແມ່ນຖືກບັນທຶກໃນໃບລາຍງານຖານະການ ເງິນສັງລວມ ກິດຈະການ ຕາມມູນຄ່າຍຸດຕິທຳ. ການປ່ຽນແປງຂອງມູນຄ່າຍຸດຕິທຳແມ່ນຖືກບັນທຶກເປັນ "ກຳໄລ/(ຂາດທຶນ) ສຸດທິໃນ ຫລັກຊັບ ແລະ ການຊື້-ຂາຍເງິນຕາຕ່າງປະເທດ". ລາຍຮັບດອກເບ້ຍ ແລະ ເງິນປັນຜົນ ແມ່ນຖືກບັນທຶກເປັນ "ກຳໄລ/ (ຂາດທຶນ) ສຸດທິ ຈາກຫລັກຊັບ ແລະ ການຊື້ - ຂາຍເງິນຕາຕ່າງປະເທດ". ອີງຕາມ ກຳນົດເວລາຂອງສັນຍາ ຫລື ເມື່ອສິດໃນ ການຈ່າຍໄດ້ເກີດຂຶ້ນ.

ລວມຢູ່ໃນການຈັດປະເພດນີ້ແມ່ນຫລັກຊັບລົງທຶນ ເຊິ່ງສ່ວນໃຫຍ່ແມ່ນເພື່ອຊື້ - ຂາຍໃນໄລຍະສັ້ນ.

2.6.2.4 ມື້ທີ 1 ກຳໄລ ຫລື ຂາດທຶນ

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທຳຂອງລາຄາຕາມທ້ອງຕະຫລາດໃນປັດຈຸບັນຂອງເຄື່ອງມື ການເງິນອັນດຽວກັນ ຫລື ອີງຕາມມູນຄ່າທີ່ໄດ້ສຳຫລວດໃນຕະຫລາດ, ທະນາຄານຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳ ("ມື້ທີ 1 "ກຳໄລ ຫລື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ". ໃນກໍລະນີ ທີ່ມູນຄ່າຍຸດຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫລວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດ ຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ກໍ່ຕໍ່ເມື່ອ ຂໍ້ມູນທີ່ ນຳໃຊ້ສາມາດສັງເກດເຫັນໄດ້ຈະແຈ້ງ ຫຼື ເມື່ອເຄື່ອງມືທາງການເງິນຖືກສະສາງອອກຈາກບັນຊີ.

2.6.2.5 ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ ປະກອບມີ ຫຼັກຊັບທຶນ. ຫຼັກຊັບທຶນຈະຖືກຈັດປະເພດເປັນຫຼັກຊັບປະເພດມີ ໄວ້ເພື່ອຂາຍ ຖ້າໃນກໍລະນີທີ່ຫຼັກຊັບດັ່ງກ່າວ ບໍ່ໄດ້ຖືກຈັດເປັນປະເພດຫຼັກຊັບມີໄວ້ເພື່ອການຄ້າ ຫລື ຫຼັກຊັບທີ່ບັນທຶກມູນຄ່າ ຍຸດຕິທຳ ໂດຍຜ່ານ ກຳໄລ ແລະ ຂາດທຶນໂດຍກົງ. ຫຼັກຊັບທຶນປະເພດນີ້ ແມ່ນເກີດຂຶ້ນໂດຍບໍ່ມີໄລຍະເວລາທີ່ແນ່ນອນ ແລະ ອາດຈະຖືກຂາຍອອກໄປເພື່ອເຮັດໃຫ້ມີສະພາບຄ່ອງ ຫລື ເພື່ອຕອບສະໜອງການປ່ຽນແປງເງື່ອນໄຂໃນຕະຫຼາດ.

ທະນາຄານຍັງບໍ່ໄດ້ຮັບຮູ້ບັນດາເງິນກູ້ ຫລື ໜີ້ຕ້ອງຮັບເປັນການລົງທຶນການເງິນມີໄວ້ເພື່ອຂາຍ.

ຫລັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າເປັນມູນຄ່າຍຸດຕິທຳ.

ກຳໄລ ຫລື ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດທຶນ (ໃນໃບລາຍງານຜົນໄດ້ຮັບນອກການທຸລະກິດ) ເປັນ "ເງິນສະສຳລັບຫລັກຊັບມີໄວ້ເພື່ອຂາຍ". ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫລື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ ວ່າແມ່ນ "ລາຍຮັບອື່ນໆຈາກການດຳເນີນງານ" ເມື່ອທະນາຄານ ລົງທຶນຫລາຍກວ່າໜຶ່ງລາຍການໂດຍນຳໃຊ້ຫລັກຊັບຄ້ຳປະກັນດຽວກັນ, ມັນຈະຖືກສະສາງອອກຕາມຫລັກການເຂົ້າກ່ອນ-ອອກກ່ອນ. ເງິນປັນຜົນທີ່ຫາມາໄດ້ໃນຊ່ວງໄລຍະການຖືຊັບສິນການເງິນມີໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ລວມການກິດຈະການ ວ່າເປັນ "ລາຍຮັບອື່ນໆຈາກການດຳເນີນງານອື່ນໆ " ເມື່ອສິດຂອງການໄດ້ຮັບເງິນປັນຜົນຂອງ ທະນາຄານ ຖືກສ້າງຂຶ້ນ. ເມື່ອການຂາດທຶນເພີ່ມຂຶ້ນເນື່ອງຈາກການເຊື່ອມມູນຄ່າຂອງການລົງທຶນດັ່ງກ່າວນັ້ນ ຈະຖືກຮັບຮູ້ ໃນໃບລາຍງານຜົນໄດ້ຮັບລວມກິດຈະການ ວ່າເປັນ " ການຫັກຄ່າເຊື່ອມການລົງທຶນທາງການເງິນ " ໂດຍປ່ຽນຈາກ "ເງິນແຮ ສຳລັບຫລັກຊັບມີໄວ້ເພື່ອຂາຍ".

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.2 ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ (ຕໍ່)

2.6.2.6 ການລົງທຶນທີ່ຖືໄວ້ຈົນຄົບກຳນົດ

ການລົງທຶນທີ່ຖືໄວ້ຈົນຄົບກຳນົດແມ່ນຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນທາງການເງິນ ເຊິ່ງມີການກຳນົດໄວ້ຢ່າງຈະແຈ້ງ ຫຼື ສາມາດກຳນົດໄດ້ໄລຍະເວລາໃນການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດ. ພາຍຫລັງການຮັບຮູ້ມູນຄ່າເບື້ອງຕົ້ນ, ການລົງທຶນປະເພດຖືໄວ້ຈົນຄົບກຳນົດຈະຖືກບັນທຶກອີງຕາມຕົ້ນທຶນ ບວກໃຫ້ ລາຍຮັບ/ລາຍຈ່າຍດອກເບ້ຍຕ້ານຮັບ ໂດຍຄິດໄລ່ຕາມອັດຕາດອກເບ້ຍຕາມສັນຍາຕາມແບບວິທີຄົງຕົວ. ການລົງທຶນປະເພດຖືໄວ້ຈົນຄົບກຳນົດ ຈະຖືກປະເມີນຄ່າເຊື່ອມເປັນແຕ່ລະໄລຍະ. ຈະມີການຫັກຄ່າເຊື່ອມຂອງຫລັກຊັບປະເພດນີ້ ຖ້າຫາກມູນຄ່າຍຸດຕິທຳມີການຫຼຸດລົງ ຫຼື ຫຼຸດລົງຕ່ຳກວ່າຕົ້ນທຶນຊື້ ຫຼື ໄລຍະເວລາຂອງການຫຼຸດລົງຂອງລາຄາມີລັກສະນະຍາວນານ. ຄ່າເຊື່ອມທີ່ເກີດຈາກຫລັກຊັບແບບນີ້ຈະຖືກບັນທຶກໃນໃບລາຍງານຜົນໄດ້ຮັບສະເພາະການກິດຈະການໃນພາກສ່ວນຂອງ "ລາຍຈ່າຍຈາກຂາດທຶນສິນເຊື່ອ".
ຖ້າທະນາຄານຕ້ອງການຂາຍ ຫລື ຈັດປະເພດການລົງທຶນທີ່ຖືໄວ້ຈົນຄົບກຳນົດໃໝ່ກ່ອນມື້ຄົບກຳນົດ (ນອກເໜືອຈາກມີເຫດການໃດໜຶ່ງສະເພາະ), ລາຍການຄັງຫລັກຊັບທີ່ຖືກຈັດເປັນປະເພດ ຖືໄວ້ຈົນຄົບກຳນົດທັງໝົດຈະຖືກປ່ຽນແປງ ແລະ ຈະຕ້ອງຖືກຈັດປະເພດຄືນໃໝ່ເປັນ ຫລັກຊັບມີໄວ້ເພື່ອຂາຍ. ນອກຈາກນີ້, ທະນາຄານຈະຖືກຫ້າມບໍ່ໃຫ້ຈັດປະເພດຊັບສິນການເງິນໃດໆໃຫ້ເປັນຊັບສິນການເງິນທີ່ຖືໄວ້ຈົນຄົບພາຍໃນ 2 ປີ.

2.6.2.7 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ໃຫ້ລູກຄ້າ

"ໜີ້ຕ້ອງຮັບຈາກທະນາຄານອື່ນ" ແລະ "ເງິນກູ້ໃຫ້ລູກຄ້າ", ລວມມີ ຊັບສິນການເງິນທີ່ບໍ່ແມ່ນອານຸພັນ ຫລື ການຊຳລະທີ່ບໍ່ມີໃນຕະຫລາດທີ່ມີການເຄື່ອນໄຫວ, ຍົກເວັ້ນ:

- ທະນາຄານມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫລື ທະນາຄານສາມາດຂາຍໄດ້ໃນເວລາທີ່ສັ້ນ, ເມື່ອການຮັບຮູ້ເບື້ອງຕົ້ນ, ກຳນົດຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫລື ຂາດທຶນ.
- ທະນາຄານຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກຳນົດມູນຄ່າຂາຍ.
- ທະນາຄານອາດຈະບໍ່ໄດ້ກຳໄລຈາກການລົງທຶນທັງໝົດ, ເນື່ອງຈາກການເຊື່ອມຄ່າຂອງສິນເຊື່ອ

ຫຼັງຈາກການປະເມີນເບື້ອງຕົ້ນ, ຕໍ່ມາ ມູນຄ່າ "ເງິນກູ້ໃຫ້ລູກຄ້າ" ແລະ "ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ" ຈະຖືກປະເມີນຕາມວິທີການຫຼຸດຕົ້ນທຶນລົງ ໂດຍໃຊ້ອັດຕາດອກເບ້ຍຕົວຈິງ ລົບໃຫ້ ສ່ວນຫຼຸດຄ່າເຊື່ອມມູນຄ່າ. ມູນຄ່າທີ່ໄດ້ຈາກວິທີການຫຼຸດຕົ້ນທຶນລົງ ຈະຖືກຄິດໄລ່ໂດຍລວມເອົາບັນດາສ່ວນຫຼຸດ ຫຼື ຄ່າທຳນຽມທີ່ນຳໃຊ້ເພື່ອເຂົ້າຄອບຄອງ ແລະ ຄ່າບໍລິການ ແລະ ຕົ້ນທຶນທີ່ເປັນສ່ວນປະກອບຂອງອັດຕາດອກເບ້ຍຕົວຈິງ. ຄ່າເຊື່ອມຈະຖືກລວມຢູ່ໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ" ໃນໃບລາຍງານຜົນໄດ້ຮັບລວມການກິດຈະການ. ການຂາດທຶນຈາກການເຊື່ອມຄ່າຈະຖືກຮັບຮູ້ເປັນ "ລາຍຈ່າຍຂາດທຶນສິນເຊື່ອ" ໃນໃບລາຍງານຜົນໄດ້ຮັບລວມກິດຈະການ.

ທະນາຄານອາດຈະອອກຂໍ້ຜູກພັນໃຫ້ແກ່ເງິນກູ້ທີ່ແນ່ນອນ ເມື່ອເງິນກູ້ຖືກຖອນ ແລະ ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຄ້າຂາຍ ເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫລົ່ານີ້ຈະຖືກບັນທຶກເປັນອານຸພັນ ແລະ ຖືກປະເມີນມູນຄ່າຍຸດຕິທຳຜ່ານກຳໄລ ຫລື ຂາດທຶນ. ເມື່ອເງິນກູ້ຖືກຖອນເງິນກູ້ນັ້ນກໍ່ຈະຖືກຮັກສາໂດຍທະນາຄານ ແລະ ຈະບໍ່ຂາຍໃນໄລຍະສັ້ນ ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ໜີ້ຕ້ອງສົ່ງສິນເຊື່ອໃຫ້ຄູ່ສັນຍາ).

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.2 ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ (ຕໍ່)

2.6.2.8 ການອອກຫຼັກຊັບໜີ້ ແລະ ເງິນກູ້ຢືມອື່ນໆ

ເຄື່ອງມືທາງການເງິນທີ່ອອກໂດຍທະນາຄານ ທີ່ບໍ່ໄດ້ກຳນົດມູນຄ່າຍຸດຕິທຳ ຜ່ານກຳໄລ ຫລື ຂາດທຶນ ຈະຖືກຈັດປະເພດເປັນໜີ້ສິນ ພາຍໃຕ້ "ຫຼັກຊັບໜີ້ ແລະ ເງິນກູ້ຢືມອື່ນໆ", ເມື່ອຂໍ້ຕົກລົງ ຫລື ສັນຍາໄດ້ຖືກເຮັດຂຶ້ນ ແລະ ເຮັດໃຫ້ທະນາຄານມີພັນທະທີ່ຕ້ອງຈ່າຍເງິນສົດ ຫລື ຊັບສິນການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ ຫລື ເຮັດໃຫ້ພັນທະດັ່ງກ່າວ ສາມາດສ້າງຜົນປະໂຫຍດອື່ນນອກຈາກການປ່ຽນເປັນຊັບສິນ ຫລື ເງິນສົດ ຫລື ຊັບສິນການເງິນອື່ນໆເປັນຊັບສິນຂອງຮຸ້ນທຶນ.

ຫລັງຈາກມີການປະເມີນເບື້ອງຕົ້ນ, ຫຼັກຊັບໜີ້ ແລະ ເງິນກູ້ຢືມອື່ນໆກໍ່ຈະຖືກປະເມີນຕີມູນຄ່າຕາມແບບວິທີຫຼຸດຕົ້ນທຶນລົງໃນໄລຍະຕໍ່ມາ ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ("EIR"). ມູນຄ່າຕາມການຫຼຸດຕົ້ນທຶນລົງ ຈະຖືກຄິດໄລ່ໂດຍອີງຕາມສ່ວນຫລຸດ ແລະ ຄ່າທຳນຽມທີ່ກ່ຽວພັນກັບການອອກຫຼັກຊັບ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງການຄິດໄລ່ EIR.

ເຄື່ອງມືທາງການເງິນແບບປະສົມປະສານ ເຊິ່ງມີທັງໜີ້ສິນ ແລະ ທຶນເປັນສ່ວນປະກອບ ແມ່ນຖືກແຍກໃນມື້ອອກເຄື່ອງມື. ສ່ວນແບ່ງທີ່ໄດ້ຈາກການຂາຍເຄື່ອງມືຈະຖືກແບ່ງໄປເປັນສ່ວນປະກອບຂອງໜີ້ໃນມື້ອອກເຄື່ອງມື ຕາມມູນຄ່າຍຸດຕິທຳ (ເຊິ່ງຈະກຳນົດຕາມລາຄາຕະຫລາດທີ່ມີຢູ່ສຳລັບເຄື່ອງມືໜີ້ທີ່ຄ້າຍຄືກັນ). ສຳລັບສ່ວນທີ່ເປັນທຶນແມ່ນຖືກແບ່ງສ່ວນທີ່ເຫລືອຫລັງຈາກຫັກມູນຄ່າຍຸດຕິທຳຂອງເຄື່ອງມື ໃນຈຳນວນທັງໝົດທີ່ແຍກຈາກສ່ວນປະກອບທີ່ເປັນໜີ້. ມູນຄ່າຂອງຊັບສິນທີ່ເປັນອານຸພັນ ທີ່ໄດ້ມາທັງໝົດ (ເຊັ່ນ: Call option) ທີ່ຢູ່ໃນເຄື່ອງມືການເງິນທີ່ກ່ຽວຂ້ອງ (ນອກເໜືອຈາກສ່ວນປະກອບຂອງທຶນ) ແມ່ນຈະຖືກລວມຢູ່ໃນສ່ວນປະກອບຂອງໜີ້.

2.6.2.9 ການຈັດປະເພດຊັບສິນການເງິນຄືນໃໝ່

ເລີ່ມຈາກວັນທີ 1 ກໍລະກົດ 2008, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ (ອີງໃສ່ສະຖານະການທີ່ແນ່ນອນໃດໜຶ່ງ) ເຊິ່ງສາມາດຈັດຈາກ "ຫລັກຊັບປະເພດມີໄວ້ເພື່ອການຄ້າ" ໄປເປັນ: "ຫລັກຊັບປະເພດ ມີໄວ້ເພື່ອຂາຍ"; "ຫລັກຊັບປະເພດເງິນກູ້ ແລະ ໜີ້ຕ້ອງຮັບ"; ຫລື "ຫລັກຊັບປະເພດຖືໄວ້ຈົນຄົບກຳນົດ". ນັບຈາກວັນທີ ດັ່ງກ່າວ, ທະນາຄານຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ບັນດາເຄື່ອງມືທາງການເງິນ (ອີງໃສ່ສະຖານະການທີ່ແນ່ນອນໃດໜຶ່ງ) ທີ່ເປັນປະເພດ "ຫລັກຊັບມີໄວ້ເພື່ອຂາຍ" ໄປເປັນ "ຫລັກຊັບປະເພດເງິນກູ້ ແລະ ໜີ້ຕ້ອງຮັບ". ການຈັດປະເພດຄືນໃໝ່ມູນຄ່າຈາກການຈັດປະເພດຄືນໃໝ່ຈະຖືກບັນທຶກອີງຕາມມູນຄ່າຍຸດຕິທຳໃນມື້ທີ່ຈັດປະເພດຄືນໃໝ່, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດ "ຫລັກຊັບມີໄວ້ເພື່ອຂາຍ", ທຸກໆກຳໄລ ແລະ ຂາດທຶນທີ່ເກີດຈາກຊັບສິນດັ່ງກ່າວ ເຊິ່ງຖືກບັນທຶກໃນທຶນຕົນເອງ ແມ່ນຖືກລົງບັນຊີແບບຫຼຸດລົງຕາມຕົ້ນທຶນ ເຂົ້າໃນໃບລາຍງານຜົນໄດ້ຮັບຕາມຈຳນວນອາຍຸທີ່ຍັງເຫຼືອຂອງຫລັກຊັບດັ່ງກ່າວ ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ (EIR). ທຸກໆສ່ວນຜິດດ່ຽງລະຫວ່າງມູນຄ່າຫຼຸດລົງຕາມຕົ້ນທຶນໃໝ່ ແລະ ກະແສເງິນສົດຄາດຄະເນ ແມ່ນຈະຖືກບັນທຶກບັນຊີ ອີງຕາມອາຍຸການຂອງລາຍການຊັບສິນດັ່ງກ່າວທີ່ຍັງເຫລືອ ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ (EIR). ຖ້າຕໍ່ມາຊັບສິນມີການເຊື່ອມຄ່າ ທີ່ລົງບັນຊີເປັນທຶນຕົນເອງນັ້ນແມ່ນຈະຖືກນຳມາເຂົ້າໃໝ່ໃນລາຍງານຜົນໄດ້ຮັບລວມກິດຈະການ.

ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນ ອອກຈາກ " ຊັບສິນທີ່ມີໄວ້ເພື່ອການຄ້າ " ແລະ ຈັດເຂົ້າໃນ " ເງິນກູ້ ແລະ ໜີ້ຕ້ອງຮັບ " ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີຄວາມຕັ້ງໃຈ ແລະ ຄວາມສາມາດທີ່ຈະຖືໄວ້ຕໍ່ໄປ ຫລື ຈົນຄົບກຳນົດ. ຖ້າຫາກຊັບສິນຖືກຈັດປະເພດຄືນໃໝ່

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.2 ເຄື່ອງມືທາງການເງິນ - ການຮັບຮູ້ເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫລັງ (ຕໍ່)

2.6.2.9 ການຈັດປະເພດຊັບສິນການເງິນຄືນໃໝ່ (ຕໍ່)

ແລະ ຖ້າທະນາຄານສືບຕໍ່ເພີ່ມການຄາດຄະເນເງິນສົດທີ່ຈະໄດ້ຮັບໃນອະນາຄົດວ່າເປັນຜົນມາຈາກການເພີ່ມຂຶ້ນຂອງຄວາມສາມາດທີ່ຈະໄດ້ຮັບຈາກເງິນສົດດັ່ງກ່າວ, ຜົນກະທົບຂອງການເພີ່ມຂຶ້ນນັ້ນແມ່ນຖືກຮັບຮູ້ເປັນການດັດແກ້ອັດຕາດອກເບ້ຍຕົວຈິງຈາກມື້ທີ່ການຄາດຄະເນມີການປ່ຽນ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ຖືກກຳນົດເຄື່ອງມືໂດຍພື້ນຖານເຄື່ອງມື. ທະນາຄານ ບໍ່ໄດ້ຈັດປະເພດຄືນໃໝ່ຕາມມູນຄ່າຍຸດຕິທຳໂດຍຜ່ານການຈັດປະເພດກຳໄລ ແລະ ຂາດທຶນຫລັງຈາກການຮັບຮູ້ເບື້ອງຕົ້ນ.

2.6.3 ການສະສາງຊັບສິນ ແລະ ໜີ້ສິນທາງການເງິນ

2.6.3.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫລື ສ່ວນໜຶ່ງຂອງຊັບສິນການເງິນ ຫລື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກສະສາງອອກຈາກຊັບສິນກໍ່ຕໍ່ເມື່ອ:

- ສິດໃນການຮັບກະແສເງິນສົດຈາກຊັບສິນໄດ້ໝົດກຳນົດແລ້ວ.
- ທະນາຄານໄດ້ໂອນກຳມະສິດໃນການຮັບກະແສເງິນສົດຈາກຊັບສິນ ຫລື ໄດ້ຍອມຮັບພັນທະໃນການຈ່າຍເງິນສົດທີ່ໄດ້ຮັບທັງໝົດຕາມກຳນົດເວລາໃຫ້ແກ່ບຸກຄົນທີສາມພາຍໃຕ້ຮູບແບບ "ການຕິດພັນ" ແລະ ລວມທັງ:
  - ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ຫລື ບໍ່ໄດ້ໂອນ ຫລື
  - ຮັກສາຄວາມສ່ຽງ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ແຕ່ໄດ້ໂອນການຄຸ້ມຄອງຊັບສິນ

ເມື່ອທະນາຄານໄດ້ໂອນສິດໃນການໄດ້ຮັບເງິນສົດຈາກຊັບສິນ ຫລື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ ແລະ ບໍ່ໄດ້ໂອນ ຫລື ຍັງຄົງຮັກສາຄວາມສ່ຽງທັງໝົດ ແລະ ຜົນຕອບແທນຂອງຊັບສິນ ຫລື ໄດ້ໂອນສິດໃນການຄຸ້ມຄອງຊັບສິນ, ຊັບສິນທີ່ເພີ່ມຂຶ້ນຂອງທະນາຄານ. ໃນກໍລະນີນີ້, ທະນາຄານຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ທະນາຄານຕ້ອງຮັບຜິດຊອບ ຖືກຄິດໄລ່ຢ່າງຖືກຕ້ອງ ບົນພື້ນຖານທີ່ວ່າມັນຈະມີຜົນກະທົບຕໍ່ສິດ ແລະ ຂໍ້ຜູກພັນຂອງທະນາຄານ ຫລື ບໍ່.

ເອກະສານທີ່ກ່ຽວຂ້ອງກັບການຄ້ຳປະກັນການໂອນຊັບສິນແມ່ນ ຕ້ອງໃສ່ມູນຄ່າທີ່ຕ່ຳກວ່າມູນຄ່າຕາມບັນຊີໃນເບື້ອງຕົ້ນ ແລະ ທະນາຄານຕ້ອງຊຳລະຄືນຕາມມູນຄ່າສູງສຸດຂອງຊັບສິນ.

2.6.3.2 ໜີ້ສິນທາງການເງິນ

ໜີ້ສິນການເງິນຈະໝົດໄປເມື່ອໜີ້ສິນຖືກຊຳລະ ຫລື ຖືກຍົກເລີກ ຫລື ໝົດກຳນົດ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫລື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ເຊັ່ນ: ການປ່ຽນແປງ ຫລື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່ ແລະ ສ່ວນຜິດຕ່າງຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນໄດ້ຮັບ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫຼຸບນະໂຍບາຍບັນຊີທີ່ສຳຄັນ (ຕໍ່)

2.6.4 ການກຳນົດມູນຄ່າຍຸດຕິທຳ

ມູນຄ່າຍຸດຕິທຳຂອງຊັບສິນທາງການເງິນ ທີ່ມີການຊື້-ຂາຍໃນຕະຫຼາດນະມື້ທີ່ເຮັດເອກະສານລາຍງານແມ່ນອີງຕາມລາຄາປະກາດຂາຍຂອງຕະຫຼາດ ຫຼື ລາຄາປະກາດຂອງຜູ່ຂາຍ (ລາຄາທີ່ຜູ່ຊື້ສະເໜີຊື້ ສຳລັບຖານະຊື້ເກັບໄວ້ ແລະ ລາຄາທີ່ຜູ່ຂາຍ ສະເໜີຂາຍ ສຳລັບຖານະຂາຍຢືມ) ໂດຍບໍ່ຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍທີ່ໄຊ້ເຂົ້າໃນທຸລະກຳດັ່ງກ່າວ.

ສຳລັບເຄື່ອງມືທາງການເງິນອື່ນໆທັງໝົດທີ່ມີການຊື້-ຂາຍໃນຕະຫຼາດ, ລາຄາຍຸດຕິທຳແມ່ນພິຈາລະນາໂດຍການນຳໃຊ້ວິທີການປະເມີນມູນຄ່າຕາມແບບທີ່ເໝາະສົມ. ວິທີການປະເມີນມູນຄ່າແມ່ນລວມມີ: ວິທີສ່ວນຫຼຸດກະແສເງິນສົດ, ການສົມທຽບກັບລາຄາຂອງລາຍການທີ່ຄ້າຍຄືກັນ ຖ້າຫາກມີລາຄາທີ່ມີການຊື້ຂາຍໃນຕະຫຼາດເຊິ່ງລາຄາສາມາດສັ່ງເກດເຫັນໄດ້, ແບບລາຄາທາງເລືອກ (options pricing models), ແບບສິນເຊື່ອ ແລະ ແບບຕີມູນຄ່າອື່ນໆທີ່ກ່ຽວຂ້ອງ.

ບາງເຄື່ອງມືທາງການເງິນແມ່ນບັນທຶກຕາມມູນຄ່າຍຸດຕິທຳທີ່ນຳໃຊ້ວິທີຕີມູນຄ່າທີ່ບໍ່ມີລາຄາປັດຈຸບັນຂອງຕະຫຼາດ ແລະ ຂໍ້ມູນທີ່ສາມາດສັງເກດເຫັນໄດ້ໃນຕະຫຼາດ. ມູນຄ່າຍຸດຕິທຳແມ່ນພິຈາລະນາໂດຍການໃຊ້ວິທີປະເມີນມູນຄ່າທີ່ໄດ້ທົດສອບລາຄາ ຫຼື ປັດໄຈ ທີ່ມີຜົນຕໍ່ລາຍການທີ່ເກີດຂຶ້ນຈິງໃນຕະຫຼາດ ແລະ ນຳໃຊ້ການພິຈາລະນາຂອງທະນາຄານໃນການຄາດຄະເນວິທີທີ່ເໝາະສົມທີ່ສຸດ.

ວິທີແມ່ນໄດ້ດັດປັບໃຫ້ສະທ້ອນໃຫ້ຄອບຄຸມເອົາ ລາຄາທີ່ຜູ່ຊື້ສະເໜີຊື້ ແລະ ລາຄາທີ່ຜູ່ຂາຍສະເໜີຂາຍ ເພື່ອໃຫ້ສະແດງເຖິງຕົ້ນທຶນທີ່ຕ້ອງນຳໃຊ້ເພື່ອຂາຍລາຍການດັ່ງກ່າວ, ການດັດແກ້ການຕີມູນຄ່າ ໜີ້ ແລະ ມີ, ການຫຍາຍສະພາບຄ່ອງ ແລະ ຂໍ້ຈຳກັດຂອງວິທີດັ່ງກ່າວ. ນອກຈາກນີ້ ກຳໄລ ຫຼື ຂາດທຶນ ທີ່ໄດ້ມີການຄິດໄລ່ໄວ້ ໃນຕອນທີ່ເຄື່ອງມືທາງການເງິນຖືກບັນທຶກຄັ້ງທຳອິດ (ມື້ທີ 1 ກຳໄລ/ຂາດທຶນ) ໄດ້ຖືກເຍື້ອນອອກໄປ ແລະ ຈະຮັບຮູ້ ເມື່ອປັດໄຈສາມາດສັງເກດໄດ້ ຫຼື ການບໍ່ສາມາດຮັບຮູ້ເຄື່ອງມືທາງການເງິນ.

ການວິເຄາະມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ ແລະ ລາຍລະອຽດຂອງວິທີໃນການວັດແມ່ນຢູ່ໃນບົດອະທິບາຍເລກທີ 34.

2.6.5 ການເຊື່ອມມູນຄ່າຂອງຊັບສິນການເງິນ

ທະນາຄານປະເມີນໃນມື້ເຮັດບົດລາຍງານວ່າມີຫລັກຖານລະບຸທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນມີການເຊື່ອມມູນຄ່າ ຫລື ບໍ່. ຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນ ຈະຖືວ່າມີຄວາມເສຍຫາຍ ຖ້າພຽງແຕ່ວ່າມີຫລັກຖານລະບຸຄວາມເສຍຫາຍຈາກຜົນຂອງໜຶ່ງ ຫລື ຫລາຍເຫດການທີ່ປະກົດຂຶ້ນຫລັງຈາກມີການຮັບຮູ້ຊັບສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫລື ຫລາຍເຫດການ) ໄດ້ສົ່ງຜົນກະທົບເຖິງການຄາດຄະເນ ກະແສເງິນສົດໃນອະນາຄົດຂອງຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ ຢ່າງໜ້າເຊື່ອຖື.

ຫລັກຖານຂອງການເຊື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າອາດລວມມີສິ່ງທີ່ບົ່ງເຖິງຄວາມຫຍຸ້ງຍາກທາງດ້ານການເງິນຂອງຜູ່ຢືມ ຫລື ກຸ່ມຂອງຜູ່ຢືມ, ການຜິດສັນຍາ ຫລື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າພວກເຂົາຈະລົ້ມລະລາຍ ຫລື ການປັບປຸງລະບົບການເງິນຄົນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດຫລຸດລົງເຊັ່ນການປ່ຽນແປງໜີ້ເກີນກຳນົດ ຫລື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 *ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ* (ຕໍ່)

2.6.5 *ການເຊື່ອມມູນຄ່າຂອງຊັບສິນການເງິນ* (ຕໍ່)

ຊັບສິນການເງິນທີ່ບັນທຶກຕາມການຫຼຸດຕົ້ນທຶນລົງ

ສຳລັບການຫັກຄ່າເຊື່ອມຕົ້ນທຶນຊັບສິນການເງິນ (ເຊັ່ນ: ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ເຊັ່ນດຽວກັບການລົງທຶນທີ່ຖືໄວ້ຈົນຄອດມື້ຄົບກຳນົດ), ທະນາຄານປະເມີນເອງໃນເບື້ອງຕົ້ນວ່າ ຫລັກຖານການເຊື່ອມຄ່າ ຂອງຊັບສິນການເງິນນັ້ນສຳຄັນ ຫຼື ບໍ່. ຖ້າທະນາຄານກຳນົດວ່າບໍ່ມີຫລັກຖານການເຊື່ອມຄ່າສຳລັບຊັບສິນການເງິນ, ລວມທັງ ຊັບສິນໃນກຸ່ມຂອງຊັບສິນການເງິນທີ່ຄ້າຍຄືກັບຄວາມສ່ຽງສິນເຊື່ອ ແລະ ໄດ້ປະເມີນຄວາມເສຍຫາຍຂອງຊັບສິນເຫຼົ່ານັ້ນ. ບັນດາຊັບສິນທີ່ຖືກປະເມີນຄວາມເສຍຫາຍສະເພາະກິດຈະການ ແລະ ຄວາມເສຍຫາຍດັ່ງກ່າວນັ້ນບໍ່ໄດ້ລວມເຂົ້າໃນຄວາມ ເສຍຫາຍທັງໝົດ.

ຖ້າຫາກມີຫລັກຖານວ່າຄ່າເຊື່ອມໜີ້ເສຍເກີດຂຶ້ນ, ມູນຄ່າຂາດທຶນຈະຖືກຄິດໄລ່ເປັນສ່ວນຕ່າງລະຫວ່າງ ຍອດຍົກມາຂອງຊັບ ສິນ ແລະ ຍອດເຫຼືອປັດຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເຊື່ອມໜີ້ເສຍທີ່ອາດຈະເກີດຂຶ້ນໃນອະນາຄົດ). ຍອດຍົກມາຂອງຊັບສິນຫລຸດລົງ ແລະ ຖືກລົງບັນຊີສ່ວນຫລຸດ ແລະ ມູນຄ່າທີ່ຂາດທຶນແມ່ນຖືກລາຍງານໃນໃບລາຍງານຜົນ ໄດ້ຮັບ. ລາຍຮັບດອກເບ້ຍຈະຖືກຄິດໄລ່ຢ່າງຕໍ່ເນື່ອງຕາມຍອດເຫລືອ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍສ່ວນຫລຸດ ກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເຊື່ອມໜີ້ເສຍ. ລາຍຮັບດອກເບ້ຍຖືກລົງບັນຊີ "ລາຍຮັບດອກເບ້ຍ ແລະ ລາຍ ຮັບທີ່ຄ້າຍຄືກັນ".

ເງິນກູ້ ແລະ ສ່ວນຫລຸດທີ່ກ່ຽວຂ້ອງກັບເງິນກູ້ ຈະຖືກສະສາງອອກເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອຫລັກຊັບຄ້ຳປະກັນຖືກໂອນໃຫ້ທະນາຄານ. ຖ້າໃນປີຕໍ່ມາ, ຄ່າເຊື່ອມໜີ້ເສຍຈະເພີ່ມຂຶ້ນ ຫລື ຫລຸດລົງຍ້ອນວ່າ ລູກຄ້າໄດ້ມາຊຳລະຫລັງຈາກຖືກຫັກຄ່າເຊື່ອມ, ຄ່າເຊື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຖືກ ເພີ່ມຂຶ້ນ ຫລື ຫລຸດລົງຕາມ ການດັດແກ້ໃນບັນຊີສ່ວນຫລຸດ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້, ຄ່າເຊື່ອມທີ່ເກັບຄືນນັ້ນຈະຖືກລົງບັນຊີເບື້ອງມີໃນ ບັນຊີ "ລາຍຮັບອື່ນຈາກການດຳເນີນງານ".

ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ແມ່ນມູນຄ່າໃນປັດຈຸບັນຕາມອັດຕາດອກເບ້ຍຕົວຈິງຂອງຊັບ ສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫລຸດສຳລັບການຕີມູນຄ່າຂອງຄ່າເຊື່ອມມູນຄ່າແມ່ນອັດຕາ ດອກເບ້ຍຕົວຈິງໃນປັດຈຸບັນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້, ອັດຕາສ່ວນຫລຸດສຳລັບຄິດໄລ່ຄ່າ ເຊື່ອມແມ່ນຕ້ອງນຳໃຊ້ອັດຕາດອກເບ້ຍຕົວຈິງໃນປັດຈຸບັນ. ການຄິດໄລ່ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ ຄາດຄະເນໄວ້ຂອງຫລັກຊັບຄ້ຳປະກັນມີຜົນກະທົບຕໍ່ກະແສເງິນສົດ ເຊິ່ງອາດເປັນຜົນມາຈາກຫລັກຊັບຄ້ຳປະກັນທີ່ຍຶດມາໄດ້ ລົບໃຫ້ຕົ້ນທຶນຂອງຫລັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ວ່າການຍຶດຫລັກຊັບຈະເປັນໄປໄດ້ ຫລື ບໍ່ກໍ່ຕາມ.

ເພື່ອຈຸດປະສົງໃນປະເມີນການເຊື່ອມຄ່າແບບເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມບົນພື້ນຖານຕາມລັກສະນະ ຄວາມສ່ຽງທີ່ຄ້າຍຄືກັນ ເຊັ່ນ: ອຸດສະຫະກຳ, ພື້ນທີ່ພູມມິສາດ, ປະເພດຫຼັກຊັບ, ສະຖານະໃນອະດີດ ແລະ ປັດໄຈອື່ນທີ່ ກ່ຽວຂ້ອງ.

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເຊື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານ ການຂາດທຶນຜ່ານມາຂອງຊັບສິນກັບລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ຂໍ້ມູນການຂາດທຶນທີ່ຜ່ານມາຈະຖືກ ດັດແກ້ ຕາມພື້ນຖານຂໍ້ມູນທີ່ມີໃນປັດຈຸບັນ ເພື່ອສະແດງໃຫ້ເຫັນຜົນກະທົບຂອງເງື່ອນໄຂໃນປັດຈຸບັນຂອງຂໍ້ມູນການສູນ ເສຍໃນອະດີດທີ່ໄດ້ນຳໃຊ້ເຂົ້າເປັນພື້ນຖານຂ້າງເທິງ ແລະ ເພື່ອເອົາຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາທີ່ໄດ້ຖືກນຳໃຊ້ ເຂົ້າເປັນພື້ນຖານ ແຕ່ບໍ່ມີແລ້ວໃນປັດຈຸບັນອອກ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.5 ການເຊື່ອມມູນຄ່າຂອງຊັບສິນການເງິນ (ຕໍ່)

ຊັບສິນການເງິນທີ່ບັນທຶກຕາມການຫຼຸດຕົ້ນທຶນລົງ (ຕໍ່)

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາສິນຄ້າ, ເງື່ອນໄຂການຊຳລະ ຫລື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫລຸດສ່ວນຜິດດ່ຽງລະຫວ່າງຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

ການລົງທຶນທາງການເງິນມີໄວ້ເພື່ອຂາຍ

ສຳລັບການລົງທຶນທາງການເງິນມີໄວ້ເພື່ອຂາຍ, ທະນາຄານໄດ້ປະເມີນຄວາມເສຍຫາຍໃນມື້ເຮັດບົດລາຍງານ ຫລື ເມື່ອມີຫລັກຖານການເຊື່ອມມູນຄ່າ.

ກໍລະນີທີ່ການລົງທຶນໃນຮຸ້ນຖືກຈັດປະເພດເປັນການລົງທຶນມີໄວ້ເພື່ອຂາຍ, ຫລັກຖານພາຍນອກນັ້ນລວມມີການຫລຸດລົງຕ່ຳກວ່າຕົ້ນທຶນຢ່າງ "ພົ້ນເດັ່ນ" ຫລື "ຍາວນານ" ໃນມູນຄ່າຍຸດຕິທຳຂອງການລົງທຶນ. ທະນາຄານຮັກສາຄວາມ "ພົ້ນເດັ່ນ" ນັ້ນໃນອັດຕາ 20% ແລະ ຄວາມ "ຍາວນານ" ແມ່ນຫລາຍກວ່າຫົກເດືອນ. ເມື່ອມີຫລັກຖານຂອງການເຊື່ອມມູນຄ່າ, ຂາດທຶນສະສົມຈະຖືກປະເມີນເປັນສ່ວນຜິດດ່ຽງລະຫວ່າງລາຄາຊື້ ແລະ ມູນຄ່າຍຸດຕິທຳປັດຈຸບັນ ລົບ ມູນຄ່າເສຍຫາຍຂອງຊັບສິນການເງິນຜ່ານມາທີ່ຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ. ຖືກຍ້າຍຈາກທຶນຕົນເອງ ແລະ ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການ. ມູນຄ່າສູນເສຍຂອງການລົງທຶນໃນຮຸ້ນບໍ່ໄດ້ສະສົມໃນໃບລາຍງານຜົນໄດ້ຮັບລວມກິດຈະການ; ການເພີ່ມຂຶ້ນຂອງມູນຄ່າຍຸດຕິທຳຫລັງຈາກຫັກຄ່າເຊື່ອມມູນຄ່າຈະຖືກຮັບຮູ້ເປັນທຶນ.

ການເຈລະຈາຄືນກ່ຽວກັບເງິນກູ້

ຖ້າເປັນໄປໄດ້, ທະນາຄານພະຍາຍາມຊອກຫາວິທີທາງເຈລະຈາກັບລູກຄ້າເງິນກູ້ທີ່ມີບັນຫາດ້ວຍການປັບໂຄງສ້າງໜີ້ຄືນໃໝ່ແທນທີ່ຈະຍຶດຫຼັກຊັບຄ້ຳປະກັນ. ໃນນີ້ອາດລວມໄປເຖິງການເລື່ອນເວລາຊຳລະເງິນກູ້ ແລະ ເຮັດຂໍ້ຕົກລົງກ່ຽວກັບເງື່ອນໄຂຂອງເງິນກູ້ບ້ວງໃໝ່. ເມື່ອໄລຍະການຊຳລະໜີ້ໄດ້ຮັບການເຈລະຈາ, ທຸກໆການເຊື່ອມມູນຄ່າຈະຖືກວັດແທກດ້ວຍອັດຕາດອກເບ້ຍຕົວຈິງ ດັ່ງທີ່ໄດ້ຖືກຄິດໄລ່ມາກ່ອນການເຈລະຈະໄລຍະການຊຳລະເງິນກູ້ ແລະ ເງິນກູ້ບ້ວງນັ້ນກໍ່ຈະບໍ່ກາຍກຳນົດ. ຄະນະບໍລິຫານສືບຕໍ່ທົບທວນການເຈລະຈາເງິນກູ້ ເພື່ອໃຫ້ແນ່ໃຈວ່າການເຈລະຈານັ້ນສຳເລັດຜົນ ແລະ ສາມາດຊຳລະເງິນກູ້ໃນອະນາຄົດ. ເງິນກູ້ເຫລົ່ານັ້ນຈະຖືກຈັດປະເພດເປັນສ່ວນບຸກຄົນ ຫລື ການເຊື່ອມມູນຄ່າທີ່ຖືກປະເມີນວ່າຈະເກັບຄືນ, ຖືກຄິດໄລ່ດ້ວຍອັດຕາດອກເບ້ຍຕົວຈິງຂອງເງິນກູ້.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.5 ການເຊື່ອມມູນຄ່າຂອງຊັບສິນການເງິນ (ຕໍ່)

ການຕີມູນຄ່າຫຼັກຊັບຄ້ຳປະກັນ

ທະນາຄານຊອກຫາວິທີທີ່ຈະນຳໃຊ້ຫລັກຊັບຄ້ຳປະກັນ, ຖ້າເປັນໄປໄດ້, ເພື່ອຫລຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫລັກຊັບຄ້ຳປະກັນອາດເປັນໄດ້ຫລາຍຮູບແບບເຊັ່ນ: ເງິນສົດ, ຫລັກຊັບ, ໜັງສືສິນເຊື່ອ/ຄ້ຳປະກັນ, ດິນ ແລະ ເຮືອນ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການປັບປຸງສິນເຊື່ອເຊັ່ນ: ຂໍ້ຕົກລົງຊຳລະສະສາງໂດຍທົ່ວໄປ ມູນຄ່າຍຸດຕິທຳຂອງຫລັກຊັບຄ້ຳປະກັນແມ່ນຖືກປະເມີນໂດຍທົ່ວໄປໃນມູນຄ່າຕ່ຳສຸດໃນເບື້ອງຕົ້ນ ຫລື ຕາມບົດລາຍງານສຳລັບຫ້າເດືອນຕົ້ນປີຂອງທະນາຄານ, ເຖິງຢ່າງໃດກໍ່ຕາມ, ຫລັກຊັບຄ້ຳປະກັນບາງຮູບແບບ ເຊັ່ນ: ເງິນສົດ ຫລື ຫລັກຊັບທີ່ກ່ຽວຂ້ອງກັບເງື່ອນໄຂສ່ວນຫລຸດແມ່ນຈະຖືກປະເມີນທຸກມື້.

ເພື່ອເພີ່ມຄວາມເປັນໄປໄດ້, ທະນາຄານໄດ້ນຳໃຊ້ຂໍ້ມູນຈາກຕະຫລາດທີ່ມີການເຄື່ອນໄຫວສຳລັບປະເມີນຊັບສິນການເງິນ, ທີ່ໃຊ້ເປັນຫລັກຊັບຄ້ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດການົດມູນຄ່າຕາມທ້ອງຕະຫລາດຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫລັກຊັບຄ້ຳປະກັນທີ່ບໍ່ແມ່ນທາງການເງິນ, ເຊັ່ນ: ດິນ ແລະ ເຮືອນ, ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກບຸກຄົນທີສາມເຊັ່ນ: ນາຍໜ້າ, ລາຄາທີ່ພັກອາໃສ, ເອກະສານລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ມູນອື່ນໆ.

2.6.6 ການລົງທຶນໃນບໍລິສັດຮ່ວມທຶນ

ທະນາຄານແມ່ນມີລາຍຮັບຈາກບໍລິສັດຮ່ວມທຶນ ເຊິ່ງແມ່ນຫ້ອໜ່ວຍທຸລະກິດທີ່ມີການຄວບຄຸມຮ່ວມກັນ, ດັ່ງນັ້ນ ການຮ່ວມທຶນແມ່ນໄດ້ມີຂໍ້ຕົກລົງກັນ ກຳນົດການຄວບຄຸມຮ່ວມກັນໃນການເຄື່ອນໄຫວທຸລະກິດ. ຂໍ້ຕົກລົງໄດ້ຕົກລົງເປັນເອກະສັນກັນ ສຳລັບຂໍ້ຕົກລົງທາງດ້ານການເງິນ ແລະ ການດຳເນີນງານໃນການຮ່ວມທຶນ.

ທະນາຄານ ຮັບຮູ້ລາຍຮັບຈາກບໍລິສັດຮ່ວມທຶນ ຕາມຮູບແບບວິທີທຽບເທົ່າຕົ້ນທຶນ. ພາຍໃຕ້ຮູບແບບນີ້, ການລົງທຶນໃນບໍລິສັດຮ່ວມທຶນ ແມ່ນຖືກບັນທຶກຕາມຕົ້ນທຶນໃນເບື້ອງຕົ້ນ ຢູ່ໃນໃບລາຍງານຖານະການເງິນສັງລວມກິດຈະການ ບວກກັບລາຍການດັດແກ້ເປັນ "ຊັບສິນສຸດທິ ຕາມສັດສ່ວນຂອງການລົງທຶນກັບບໍລິສັດຮ່ວມທຶນ ຕາມພາຍຫລັງ. ຄ່ານິຍົມຕາມສັດສ່ວນຂອງການລົງທຶນໃນບໍລິສັດຮ່ວມທຶນ ແມ່ນຖືກຮັບຮູ້ເປັນມູນຄ່າຊາກ ລວມຢູ່ໃນຍອດຍົກມາ ຂອງເງິນລົງທຶນ ແລະ ບໍ່ຫັກຄ່າເຊື່ອມ.

ສ່ວນແບ່ງກຳໄລຂອງທະນາຄານຈາກບໍລິສັດຮ່ວມທຶນ ແມ່ນໄດ້ສະແດງໃຫ້ເຫັນຢູ່ໃນໃບລາຍງານ ຜົນໄດ້ຮັບລວມກິດຈະການ. ນີ້ແມ່ນກຳໄລທີ່ປະກອບເປັນທຶນຂອງຜູ້ຖືຮຸ້ນໃນບໍລິສັດຮ່ວມທຶນ ແລະ ແມ່ນກຳໄລຫຼັງອາກອນ ແລະ ເປັນລາຍຮັບທີ່ບໍ່ສາມາດຄວບຄຸມໄດ້ການລົງທຶນໃນບໍລິສັດຮ່ວມທຶນ.

ຫລັງຈາກນຳໃຊ້ຮູບແບບການລົງທຶນແລ້ວ ທະນາຄານຈະພິຈາລະນາວ່າ ຈຳເປັນຕ້ອງຮັບຮູ້ຄ່າເຊື່ອມເພີ່ມເຕີມ ຂອງການລົງທຶນໃນບໍລິສັດຮ່ວມທຶນ ຫລື ບໍ່. ທະນາຄານຈະພິຈາລະນາໃນມື້ທີ່ສ້າງບົດລາຍງານ ວ່າມີຫລັກຖານ ການເຊື່ອມຄ່າຂອງການລົງທຶນ ໃນບໍລິສັດຮ່ວມທຶນ ຫລື ບໍ່. ໃນສະຖານະການດັ່ງກ່າວ ທະນາຄານຈະຄິດໄລ່ຄ່າ ເຊື່ອມມູນຄ່າ ເປັນສ່ວນຕ່າງລະຫວ່າງຈຳນວນເງິນທີ່ເກັບຄືນໄດ້ ແລະ ຍອດຍົກມາຂອງການລົງທຶນໃນບໍລິສັດ ຮ່ວມທຶນ ແລະ ຮັບຮູ້ສ່ວນຜິດດ່ຽງຢູ່ໃນໃບລາຍງານຜົນໄດ້ຮັບສັງລວມກິດຈະການ.

2. ນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.7 ການຫັກລ້າງເຄື່ອງມືທາງການເງິນ

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ້າງກັນ ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນລວມກິດຈະການ, ຖ້າຫາກວ່າທະນາຄານຖືກບັງຄັບທາງກົດໝາຍໃຫ້ ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ່າສຸດທິ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງອາດອ້ຍການຫັກລ້າງລະຫວ່າງຊັບສິນ - ໜີ້ສິນ ແລະ ຊັບສິນ-ໜີ້ສິນທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ່າລວມໃນໃບລາຍງານຖານະການເງິນລວມກິດຈະການ.

2.6.8 ການເຊົ່າ

ການພິຈາລະນາວ່າມີຂໍ້ຕົກລົງໃດທີ່ເປັນການເຊົ່າ ຫລື ລວມຢູ່ໃນການເຊົ່າ ຫລື ບໍ່ ແມ່ນຂຶ້ນຢູ່ກັບການຕົກລົງ ແລະ ຕ້ອງກຳນົດການປະເມີນວ່າ ການປະຕິບັດຂໍ້ຕົກລົງແມ່ນຂຶ້ນຢູ່ກັບການນຳໃຊ້ຊັບສິນສະເພາະ ຫລື ຊັບສິນ ແລະ ຂໍ້ຕົກລົງໃນການໂອນກຳມະສິດນຳໃຊ້ຊັບສິນ.

ທະນາຄານເປັນຜູ້ເຊົ່າ

ການເຊົ່າທີ່ບໍ່ໄດ້ໂອນທຸກຄວາມສ່ຽງໃຫ້ທະນາຄານ ແລະ ຜົນປະໂຫຍດທີ່ເກີດຂຶ້ນໂດຍບັງເອີນຕໍ່ກຳມະສິດຂອງ ລາຍການເຊົ່າແມ່ນການເຊົ່າໃນການດຳເນີນງານ. ການຈ່າຍຄ່າເຊົ່າໃນການດຳເນີນງານແມ່ນຖືກບັນທຶກເປັນ ລາຍຈ່າຍຢູ່ໃນໃບລາຍງານຜົນໄດ້ຮັບ ດ້ວຍວິທີສະເໝີຕົວ ຕໍ່ກັບໄລຍະຂອງການເຊົ່າ. ໜີ້ຕ້ອງສິ່ງໃນການເຊົ່າທີ່ອາດເກີດຂຶ້ນແມ່ນຖືກບັນທຶກເປັນລາຍຈ່າຍຢູ່ໃນໄລຍະທີ່ມີການເຄື່ອນໄຫວເກີດຂຶ້ນ.

2.6.9 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

ລາຍຮັບຖືກຮັບຮູ້ເພື່ອຄາດຄະເນວ່າຜົນປະໂຫຍດທາງດ້ານເສດຖະກິດຈະໄຫຼມາສູ່ທະນາຄານ ແລະ ລາຍຮັບສາມາດຖືກວັດແທກມູນຄ່າໄດ້. ຫລັກການການຮັບຮູ້ລາຍຮັບສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກພິບກ່ອນລາຍຮັບຈະຖືກຮັບຮູ້.

(i) ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແລະ ຄ່າຍຄຶດອກເບ້ຍ

ສຳລັບທຸກໆເຄື່ອງມືທາງການເງິນທີ່ໄດ້ຕີເປັນມູນຄ່າຕາມຕົ້ນທຶນຫັກທີ່ດແທນ, ຊັບສິນທາງການເງິນທີ່ກ່ຳໃຫ້ເກີດດອກເບ້ຍໄດ້ຈັດປະເພດເປັນຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ລະບຸຕາມມູນຄ່າຍຸຕິທຳໂດຍຜ່ານກຳໄລ ແລະ ຂາດທຶນ, ລາຍຮັບດອກເບ້ຍ ແລະ ລາຍຈ່າຍຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງເຊິ່ງເປັນອັດຕາທີ່ສ່ວນຫລຸດໄດ້ຄາດຄະເນການຊຳລະເງິນສົດໃນອະນາຄົດ ຫລື ໄດ້ຮັບຕາມອາຍຸການນຳໃຊ້ຂອງເຄື່ອງມືການເງິນ ຫລື ໄລຍະນຳໃຊ້ທີ່ຍອມຮັບໄດ້ຂອງຍອດຍົກມາສຸດທິຂອງຊັບສິນ ຫລື ໜີ້ສິນການເງິນ. ການຄິດໄລ່ແມ່ນຕ້ອງອີງຕາມສັນຍາຂອງເຄື່ອງມືການເງິນ (ເຊັ່ນ: ກຳນົດຊຳລະ) ແລະ ຕ້ອງເອົາຄ່າທຳນຽມ ຫລື ຕົ້ນທຶນອື່ນໆຂອງເຄື່ອງມືການເງິນ ແລະ ສ່ວນໜຶ່ງຂອງອັດຕາດອກເບ້ຍຕົວຈິງ, ແຕ່ບໍ່ລວມເອົາໜີ້ເສຍໃນອະນາຄົດ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.9 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ (ຕໍ່)

(i) ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແລະ ຄ່າຍຄືດອກເບ້ຍ (ຕໍ່)

ຍອດຍົກມາຂອງຊັບສິນ ຫລື ໜີ້ສິນການເງິນຖືກດັດແກ້ໂດຍທະນາຄານປັບປຸງການຄາດຄະເນລາຍຮັບ ຫລື ລາຍຈ່າຍຂອງທະນາຄານ. ຍອດຍົກມາທີ່ດັດແກ້ນັ້ນແມ່ນຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ແລະ ມູນຄ່າດັ່ງກ່າວນັ້ນຈະຖືກລົງບັນຊີເປັນ "ລາຍຮັບອື່ນໆຈາກການດຳເນີນງານ". ເມື່ອໃດກໍ່ຕາມ, ສຳລັບປະເພດຊັບສິນທີ່ທະນາຄານຄາດຄະເນວ່າຈະເພີ່ມຂຶ້ນແມ່ນມາຈາກເງິນທີ່ຈະໄດ້ຮັບໃນທະນາຄານເຊິ່ງເປັນຜົນມາຈາກທະນາຄານສາມາດເກັບໜີ້ໄດ້, ມູນຄ່າເພີ່ມຂຶ້ນຂອງຊັບສິນຈະຖືກບັນທຶກເປັນມູນຄ່າທີ່ຖືກດັດແກ້ມາຈາກອັດຕາດອກເບ້ຍທີ່ມີຜົນຈາກມື້ທີ່ມີການປ່ຽນແປງການຄາດຄະເນ.

ອີກຢ່າງໜຶ່ງມູນຄ່າຂອງຊັບສິນການເງິນຂອງກຸ່ມຊັບສິນທີ່ຄ້າຍຄືກັນທີ່ໄດ້ບັນທຶກນັ້ນແມ່ນມີມູນຄ່າຫລຸດລົງເມື່ອງຈາກການເຊື່ອມຄ່າຂອງຊັບສິນ, ລາຍຮັບດອກເບ້ຍຈະສືບຕໍ່ຖືກຮັບຮູ້ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງທີ່ນຳໃຊ້ເຂົ້າໃນການຄິດໄລ່ຍອດຍົກມາຍອດໃໝ່.

(ii) ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານມີລາຍໄດ້ຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການຫລາກຫລາຍເພື່ອຕອບສະໜອງໃຫ້ແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມສາມາດຖືກແບ່ງເປັນສອງໝວດຕາມລຳດັບດັ່ງນີ້:

<u>ລາຍຮັບຄ່າທຳນຽມຈາກການບໍລິການໃນໄລຍະເວລາໃດໜຶ່ງ</u>

ຄ່າທຳນຽມທີ່ເກີດຈາກການບໍລິການໃນໄລຍະເວລາໃດໜຶ່ງໄດ້ຖືກຄິດໄລ່ຄ້າງຮັບໃນໄລຍະເວລາໃດໜຶ່ງ. ຄ່າທຳນຽມເຫຼົ່ານີ້ປະກອບດ້ວຍ ລາຍຮັບຈາກຄ່ານາຍໜ້າ ແລະ ການບໍລິການຊັບສິນ, ຄ່າຄຸ້ມຄອງ ແລະ ຄ່າບໍລິຫານ ແລະ ຄ່າໃຫ້ຄຳປຶກສາດ້ານອື່ນໆ. ຄ່າທຳນຽມຈາກການໃຫ້ຄຳໝັ້ນສັນຍາເງິນກູ້ຢືມ ເຊິ່ງຄາດວ່າຈະມີການເບີກຖອນກູ້ຢືມ ແລະ ຄ່າທຳນຽມສິນເຊື່ອອື່ນໆທີ່ກ່ຽວຂ້ອງ (ລວມທັງລາຍຈ່າຍອື່ນໆທີ່ເພີ່ມຂຶ້ນ). ຄ່າທຳນຽມເຫຼົ່ານີ້ຈະຖືກຮັບຮູ້ໃຫ້ເປັນລາຍຈ່າຍດັດແກ້ຂອງອັດຕາດອກເບ້ຍຕົວຈິງຂອງເງິນກູ້, ແຕ່ຖ້າຫາກເງິນກູ້ເຫຼົ່ານັ້ນບໍ່ມີຄວາມເປັນໄປໄດ້ທີ່ຈະຖືກເບີກຖອນຄ່າທຳນຽມຄຳໝັ້ນສັນຍາເງິນກູ້ຈະຖືກຮັບຮູ້ພາຍໃຕ້ໄລຍະເວລາທີ່ໄດ້ຕົກລົງກັນ ໂດຍໃຊ້ອັດຕາດອກເບ້ຍແບບສະເໝີຕົວ.

<u>ລາຍຮັບຄ່າທຳນຽມຈາກການໃຫ້ການບໍລິການ</u>

ຄ່າທຳນຽມທີ່ເກີດຂຶ້ນຈາກການເຈລະຈາ ຫຼື ມີສ່ວນຮ່ວມໃນການເຈລະຈາຂອງລາຍການເຄື່ອນໄຫວສຳລັບບຸກຄົນທີສາມ, ເຊັ່ນ: ການຈັດຊື້ຮຸ້ນ ຫລື ຫລັກຊັບອື່ນ ຫລື ຊື້ຂາຍທຸລະກິດ, ເຊິ່ງໄດ້ຮັບການຍອມຮັບສົມບູນແບບຂອງການການເຄື່ອນໄຫວທຸລະກິດພື້ນຖານ. ຄ່າທຳນຽມ ຫລື ສ່ວນປະກອບຂອງຄ່າທຳນຽມທີ່ມີການເຊື່ອມໂຍງໄປຍັງທາງປະຕິບັດບາງປະການທີ່ໄດ້ຮັບການຍອມຮັບຫລັງຈາກການປະຕິບັດຕາມກົດໝາຍທີ່ສອດຄ່ອງກັນ.

(iii) ລາຍຮັບເງິນປັນຜົນ

ລາຍຮັບຈາກເງິນປັນຜົນຖືກຮັບຮູ້ເມື່ອສິດທິໃນການໄດ້ຮັບເງິນປັນຜົນຕົກເປັນຂອງທະນາຄານ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.9 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ (ຕໍ່)

(iv) ລາຍຮັບສຸດທິຈາກການຄ້າ

ຜົນທີ່ເກີດຂຶ້ນຈາກກິດຈະກຳການຊື້ຂາຍລວມເຖິງກຳໄລ ແລະ ຂາດທຶນ ຈາກ ການປ່ຽນແປງມູນຄ່າຍຸດຕິທຳ ແລະ ລາຍຮັບ ດອກເບ້ຍ ຫຼື ລາຍຈ່າຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນ ສຳລັບ ຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນ ມີໄວ້ເພື່ອຂາຍ ເຊິ່ງລວມເຖິງສິ່ງທີ່ບໍ່ມີປະສິດທິພາບທີ່ໄດ້ບັນທຶກໄວ້ໃນທຸລະກຳຄວາມສ່ຽງ.

2.6.10 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດ ດັ່ງທີ່ໄດ້ອ້າງອີງຢູ່ໃນໃບບົດລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກຳມື, ເງິນຝາກ ກະແສລາຍວັນກັບທະນາຄານກາງ ແລະ ໜີ້ຕ້ອງຮັບຈາກທະນາຄານເມື່ອທວງຖາມ ຫລື ເມື່ອຄົບກຳນົດ 3 ເດືອນ ຫລື ຕ່ຳ ກວ່ານັ້ນ.

2.6.11 ຊັບສິນບັດ ແລະ ອຸປະກອນ

ຊັບສິນບັດ ແລະ ອຸປະກອນປະກອບມີອາຄານ ແລະ ໂຄງສ້າງ, ເຄື່ອງຈັກ, ອຸປະກອນ, ພາຫະນະ ແລະ ອື່ນໆ ແມ່ນຖືກ ກຳນົດຕາມຕົ້ນທຶນບໍ່ລວມຕົ້ນທຶນການບໍລິການປະຈຳວັນລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມມູນຄ່າສະສົມ (ຖ້າມີ). ການປ່ຽນແປງອາຍຸການນຳໃຊ້ແມ່ນຈະເຮັດໃຫ້ມີການປ່ຽນແປງວິທີການ ແລະ ໄລຍະຫັກຄ່າຫລຸ້ຍຫ້ຽນເຊິ່ງເຮັດໃຫ້ມີການ ປ່ຽນແປງທາງດ້ານບັນຊີ.

ຄ່າຫລຸ້ຍຫ້ຽນແມ່ນຖືກຄິດໄລ່ແບບວິທີສະເໜີຕົວໂດຍການຫານມູນຄ່າຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນກັບອາຍຸການ ນຳໃຊ້ຂອງພວກມັນ. ສິດນຳໃຊ້ທີ່ດິນຈະບໍ່ຖືກຫັກຄ່າຫລຸ້ຍຫ້ຽນ. ອັດຕາການຫັກຄ່າຫລຸ້ຍຫ້ຽນມີລາຍລະອຽດຂ້າງລຸ່ມນີ້:

ອາຄານ ແລະ ການສ້ອມແປງອາຄານ	5%
ເຄື່ອງໃຊ້ຫ້ອງການ	20%
ເຟີນີເຈີ້ ແລະ ເຄື່ອງຕິດຕັ້ງ	20%
ພາຫະນະ	20%

ຊັບສິນບັດ ແລະ ອຸປະກອນຈະຖືກຍຸດຮັບຮູ້ເມື່ອເວລາມີການຂາຍອອກ ຫລື ບໍ່ສາມາດນຳໃຊ້ໄດ້ອີກແລ້ວ. ກຳໄລ ແລະ ຂາດທຶນທັ້ງໝົດທີ່ເກີດຂຶ້ນຈາກການຍຸດຮັບຮູ້ຂອງຊັບສິນບັດ (ໄດ້ຄິດໄລ່ເປັນສ່ວນຕ່າງລະຫວ່າງການຂາຍອອກ ແລະ ມູນຄ່າ ຖືຄອງຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບອື່ນໆຈາກການດຳເນີນງານ" ໃນໃບລາຍງານຜົນໄດ້ຮັບຂອງປີທີ່ມີຊັບ ສິນບັດຖືກຂາຍອອກ.

2.6.12 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບດ້ວຍສິດນຳໃຊ້ທີ່ດິນ ແລະ ຊັອບແວຄອມພິວເຕີ້

ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສິນບັດຄົງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະ ສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.12 ຊັບສິນບັດຖິທີ່ບໍ່ມີຕົວຕົນ (ຕໍ່)

ຊັບສິນບັດຖິທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນບັດຖິທີ່ບໍ່ມີຕົວຕົນທີ່ໄດ້ມາຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸດຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນບັດຖິທີ່ບໍ່ມີຕົວຕົນຈະຖືກຮັບຮູ້ໂດຍການເອົາຕົ້ນທຶນລົບໃຫ້ການເຊື່ອມຄ່າສະສົມ.

ອາຍຸການນຳໃຊ້ຂອງຊັບສິນບັດຖິທີ່ບໍ່ມີຕົວຕົນແມ່ນໄດ້ຖືກປະເມີນບໍ່ວ່າຈະເປັນຊັບສິນບັດຖິທີ່ມີອາຍຸການນຳໃຊ້ທີ່ມີຂອບເຂດ ຫລື ບໍ່ມີຂອບເຂດ. ຊັບສິນບັດຖິທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີຂອບເຂດແນ່ນອນແມ່ນຖືກຫັກຄ່າຫລຸ້ຍຫ້ຽນຕະຫລອດຈົນຄົບອາຍຸການນຳໃຊ້. ໄລຍະຂອງການຫັກຄ່າຫລຸ້ຍຫ້ຽນສະສົມ ແລະ ວິທີການຫັກຄ່າເຊື່ອມສຳລັບຊັບສິນບັດຖິທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີຂອບເຂດຈະຖືກທົບທວນຄືນເປັນຢ່າງໜ້ອຍສຸດໃນທ້າຍປີການເງິນ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງເວລາ ແລະ ວິທີການຫັກຄ່າຫລຸ້ຍຫ້ຽນ, ຕາມຄວາມເໝາະສົມ ແລະ ຖືເປັນການປ່ຽນແປງທາງດ້ານບັນຊີ.

ການເຊື່ອມຄ່າແມ່ນຖືກຄິດໄລ່ຕາມພື້ນຖານການຫັກຄ່າຫລຸ້ຍຫ້ຽນແບບສະເໝີຕົ້ນຕໍ່ການຄາດຄະເນອາຍຸການໃຊ້ງານຂອງຊັບສິນບັດຖິທີ່, ເຊິ່ງມີດັ່ງຕໍ່ໄປນີ້:

▶ ສິດນຳໃຊ້ທີ່ດິນ	ບໍ່ຫັກຄ່າຫລຸ້ຍຫ້ຽນ
▶ ຊ້ອບແວຄອມພິວເຕີ້	5 ປີ

ສິດນຳໃຊ້ທີ່ດິນຂອງທະນາຄານຈະບໍ່ຖືກຫັກຄ່າຫລຸ້ຍຫ້ຽນ ເນື່ອງຈາກວ່າໄດ້ຮັບສິດ ແລະ ໄດ້ຮັບອະນຸຍາດໃຫ້ນຳໃຊ້ຈາກລັດຖະບານແຫ່ງ ສປປ ລາວ.

2.6.13 ການເຊື່ອມມູນຄ່າຂອງຊັບສິນອື່ນໆທີ່ບໍ່ແມ່ນທາງການເງິນ

ທະນາຄານປະເມີນນະມື້ເຮັດບົດລາຍງານວ່າມີຊັບສິນໃດມີການເຊື່ອມຄ່າຫລືບໍ່. ຖ້າມີ, ຫລື ເມື່ອເຮັດການທົດສອບການເຊື່ອມຄ່າປະຈຳປີ, ທະນາຄານປະເມີນຈຳນວນໜີ້ຕ້ອງຮັບຊັບສິນ. ຈຳນວນໜີ້ຕ້ອງຮັບຊັບສິນແມ່ນມູນຄ່າຂອງຊັບສິນ ຫລື ມູນຄ່າຍຸດຕິທຳຂອງເງິນສິດລວມລົບຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາຂອງຊັບສິນ ແລະ ເງິນສິດລວມມີຫລາຍກວ່າມູນຄ່າໜີ້ຕ້ອງຮັບ, ຊັບສິນແມ່ນຖືກປະເມີນການເຊື່ອມຄ່າ ແລະ ສະສາງມູນຄ່າໜີ້ຕ້ອງຮັບຂອງຊັບສິນນັ້ນອອກ.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສິດທີ່ຖືກປະເມີນໃນອະນາຄົດຖືກຫລຸດມູນຄ່າປັດຈຸບັນທີ່ຖືກ ນຳໃຊ້ໂດຍອັດຕາສ່ວນຫລຸດກ່ອນອາກອນທີ່ມີຜົນກະທົບຕໍ່ການປະເມີນມູນຄ່າປັດຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ເຫຼົ່ານີ້ຈະຖືກເຮັດຂຶ້ນໂດຍຜົນຄຸນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບບໍລິສັດໃນເຄືອ ຫລື ໂຕຊີ້ບອກມູນຄ່າຍຸດຕິທຳອື່ນໆ.

ສຳລັບຊັບສິນບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ເຮັດບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເຊື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫລື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເຊື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນມີການປ່ຽນແປງໃນການກຳນົດມູນຄ່າໜີ້ຕ້ອງຮັບຂອງຊັບສິນນັບຕັ້ງແຕ່ການເຊື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ເງິນແຮກຖືກສ້າງຂຶ້ນສຳລັບສ່ວນຕ່າງລະຫວ່າງຍອດຍົກມາ ແລະ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້, ຫລື ບໍ່ເກີນມູນຄ່າຍອດຍົກມາທີ່ຖືກກຳນົດ, ຫັກລົບຄ່າຫລຸ້ຍຫ້ຽນ, ບໍ່ມີການເຊື່ອມຄ່າເກີດຂຶ້ນສຳລັບຊັບສິນໃນປີຜ່ານມາ. ເງິນແຮທີ່ເກັບຄືນມາໄດ້ຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບສັງລວມກິດຈະການ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.14 ເງິນແຮສຳລັບໜີ້ສິນທີ່ອາດເກີດຂຶ້ນ

ເງິນແຮສຳລັບໜີ້ສິນທີ່ອາດເກີດຂຶ້ນ ແມ່ນຖືກຮັບຮູ້ເມື່ອທະນາຄານມີພັນທະໃນປັດຈຸບັນ (ທາງກົດໝາຍ ຫລື ຍອມຮັບໂດຍທົ່ວໄປ) ເຊິ່ງມີຜົນມາຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີກະແສລາຍຈ່າຍ ໄຫລອອກ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ລາຍຈ່າຍທີ່ຜູກພັນກັບເງິນແຮນັ້ນໄດ້ນຳສະເໜີເຂົ້າໃນໃບລາຍງານຜົນໄດ້ຮັບແບບສັງລວມກິດຈະການ, ເຊິ່ງສະແດງໃນມູນຄ່າສຸດທິຫຼັງຫັກລ້າງໃຫ້ການຊຳລະຄືນ.

2.6.15 ອາກອນກຳໄລ

ອາກອນໃນປີ

ອາກອນຊັບສິນ ແລະ ໜີ້ສິນທາງດ້ານອາກອນໃນປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກວັດແທກຕາມມູນຄ່າທີ່ຄາດການໄວ້ເພື່ອການ ເກັບກູ້ເງິນຄືນ ຫລື ຊຳລະເງິນໃຫ້ແກ່ເຈົ້າໜ້າທີ່. ອັດຕາອາກອນ ແລະ ກົດໝາຍອາກອນໄດ້ນຳໃຊ້ເພື່ອ ຄິດໄລ່ຈຳນວນເງິນທີ່ຖືກສະແດງໃຫ້ເຫັນຢູ່ໃນໃບລາຍງານຖານະການເງິນລວມກິດຈະການ.

ອາກອນເຍື້ອນຊຳລະ

ອາກອນເຍື້ອນຊຳລະຖືກຄິດໄລ່ໂດຍນຳໃຊ້ວິທີຄິດໄລ່ສ່ວນຜິດດ່ຽງຊຶ່ງຄາດຫັກອອກໄດ້ມື້ເຮັດໃບລາຍງານຖານະການ ເງິນລວມກິດຈະການ ເຊິ່ງເປັນສ່ວນຕ່າງລະຫວ່າງອາກອນພື້ນຖານທີ່ຕ້ອງເສຍຂອງຊັບສິນ ແລະ ໜີ້ສິນ ແລະ ຍອດຍົກມາດັ່ງກ່າວເພື່ອເຮັດບົດລາຍງານການເງິນ. ໜີ້ສິນອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນຜິດດ່ຽງຊຶ່ງຄາດຖືກເສຍອາກອນຕໍ່ໜ້າ, ຍົກເວັ້ນ:

- ເມື່ອໜີ້ສິນອາກອນເຍື້ອນຊຳລະໜີ້ສິນເພີ່ມຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫລື ໜີ້ສິນ ໃນທຸລະກຳທີ່ໃນເວລານັ້ນທຸລະກຳບໍ່ມີຜົນກະທົບ ຕໍ່ກຳໄລທາງດ້ານບັນຊີ ຫລື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.
- ອີງຕາມສ່ວນຕ່າງຂອງອາກອນຊຶ່ງຄາດ ເປັນສ່ວນໜຶ່ງຂອງການລົງທຶນໃນບັນດາສາຂາ, ບໍລິສັດໃນເຄືອ ແລະ ຜົນປະໂຫຍດຈາກບໍລິສັດຮ່ວມທຶນ, ເມື່ອຮອດເວລາເກັບຄືນສ່ວນຕ່າງອາກອນຊຶ່ງຄາດ ຈະສາມາດເກັບໄດ້ ແລະ ອາກອນດັ່ງກ່າວກໍ່ຈະບໍ່ຖືກເກັບຄືນໃນອານະຄົດ.

ຊັບສິນອາກອນເຍື້ອນຊຳລະແມ່ນໃຊ້ສຳລັບບັນດາລາຍຈ່າຍທີ່ຍົກເວັ້ນອາກອນ, ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ, ໝາຍຄວາມວ່າ ອາກອນກຳໄລຈະຖືກຄິດໄລ່ໂດຍຫັກບັນດາລາຍຈ່າຍທີ່ຍົກເວັ້ນອາກອນ, ແລະ ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນນັ້ນສາມາດຍອມຮັບໄດ້, ຍົກເວັ້ນ.

- ເມື່ອຊັບສິນອາກອນເຍື້ອນຊຳລະທີ່ກ່ຽວຂ້ອງກັບບັນດາລາຍຈ່າຍທີ່ບໍ່ຕ້ອງຫັກອາກອນ, ສ່ວນຜິດດ່ຽງເພີ່ມຂຶ້ນຈາກມູນຄ່າຂອງຊັບສິນ ແລະ ໜີ້ສິນທີ່ຖືກຮັບຮູ້ເບື້ອງຕົ້ນໃນລາຍການທີ່ບໍ່ໄດ້ລວມເຂົ້າໃນທຸລະກິດ ແລະ ໃນເວລາທີ່ການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫລື ກຳໄລ ຫລື ຂາດທຶນທາງດ້ານອາກອນ.
- ອີງຕາມສ່ວນຕ່າງອາກອນຊຶ່ງຄາດທີ່ສາມາດຫັກອອກໄດ້ ເປັນສ່ວນໜຶ່ງຂອງການລົງທຶນໃນບັນດາສາຂາ, ບໍລິສັດໃນເຄືອ ແລະ ຜົນປະໂຫຍດຈາກບໍລິສັດຮ່ວມທຶນ, ຊັບສິນ ແລະ ໜີ້ສິນອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ພຽງເພື່ອວ່າສ່ວນຕ່າງອາກອນດັ່ງກ່າວນັ້ນຈະບໍ່ຖືກເກັບຄືນໃນອະນາຄົດ ແລະ ກຳໄລ ທີ່ຖືກອາກອນຈະເກີດຂຶ້ນເຊິ່ງສ່ວນຕ່າງອາກອນຊຶ່ງຄາດຈະບໍ່ສາມາດຖືກຫັກອອກ.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.15 ອາກອນກຳໄລ (ຕໍ່)

ອາກອນເຍື້ອນຊຳລະ (ຕໍ່)

ຍອດຍົກໄປຂອງຊັບສິນອາກອນເຍື້ອນຊຳລະຖືກຄິດໄລ່ຄືນໃນມື້ເຮັດໃບລາຍງານຖານະການເງິນລວມກິດຈະການ ແລະ ຖືກຫລຸດລົງຍ້ອນວ່າກຳໄລທີ່ຖືກອາກອນໄດ້ມາຈາກສ່ວນໜຶ່ງ ຫລື ທັງໝົດຂອງອາກອນເຍື້ອນຊຳລະທີ່ບໍ່ໄດ້ລົງບັນຊີຈະຖືກຄິດໄລ່ຄືນໃນມື້ເຮັດໃບລາຍງານຖານະການເງິນແບບສັງລວມກິດຈະການ ແລະ ຖືກຮັບຮູ້ວ່າເປັນກຳໄລທີ່ຖືກອາກອນໃນອະນາຄົດທີ່ອະນຸຍາດໃຫ້ເຍື້ອນໄປຕໍ່ໜ້າ. ອາກອນຍົກໄປຫັກຕໍ່ທີ່ບໍ່ຖືກຮັບຮູ້ຈະຖືກປະເມີນໃນບົດລາຍງານຖານະການເງິນລວມກິດຈະການ ແລະ ຖືກຮັບຮູ້ເພື່ອວ່າອາກອນດັ່ງກ່າວອາດຈະສາມາດເກັບຄືນໄດ້ໃນອະນາຄົດຖ້າໃນກໍລະນີທີ່ມີກຳໄລ.

ຊັບສິນ ແລະ ໜີ້ສິນ ອາກອນເຍື້ອນຊຳລະຖືກຄິດໄລ່ຕາມອັດຕາທີ່ຍອມຮັບພາຍໃນປີເມື່ອຊັບສິນຖືກຂາຍ ຫລື ໜີ້ສິນຖືກສະສາງ, ອີງຕາມອັດຕາອາກອນ (ແລະ ກົດໝາຍອາກອນ) ທີ່ມີ ຫລື ໄດ້ສະແດງໃນມື້ເຮັດໃບລາຍງານຖານະການເງິນລວມກິດຈະການ.

ຊັບສິນ ແລະ ໜີ້ສິນ ອາກອນເຍື້ອນຊຳລະຖືກຫັກລ້າງ ຖ້າມີຜົນບັງຄັບໃຊ້ກົດໝາຍທີ່ມີກຳນົດປົດຊັບສິນອາກອນ ແລະ ໜີ້ສິນອາກອນ ແລະ ອາກອນເຍື້ອນຊຳລະທີ່ກ່ຽວຂ້ອງກັບການເສຍອາກອນແບບດຽວກັນ ແລະ ເຈົ້າໜ້າທີ່ເກັບອາກອນແບບດຽວກັນ .

2.6.16 ຊັບສິນທີ່ໄດ້ຮັບມອບໝາຍອຳນາດ (ຊັບສິນທີ່ທະນາຄານບໍ່ໄດ້ຖືກຳມະສິດ)

ທະນາຄານໄດ້ໃຫ້ບໍລິການກ່ຽວກັບ ກອງທຶນ ແລະ ບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ຖືຄອງ ຫຼື ໄດ້ລົງທຶນໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນລວມກິດຈະການ ເນື່ອງຈາກວ່າຊັບສິນດັ່ງກ່າວບໍ່ແມ່ນຊັບສິນຂອງທະນາຄານ.

2.6.17 ຄັງສຳຮອງຕ່າງໆ

ຄັງສຳຮອງຖືກບັນທຶກເປັນທຶນ (ໃນລາຍງານຖານະການເງິນລວມກິດຈະການ) ຂອງເອກະສານລາຍງານການເງິນລວມກິດຈະການຂອງທະນາຄານ, ເຊິ່ງລວມມີ:

- ເງິນແຮສຳລັບຫລັກຊັບມີໄວ້ເພື່ອຂາຍ, ເຊິ່ງປະກອບດ້ວຍສ່ວນປ່ຽນແຝງຂອງມູນຄ່າຍຸດຕິທຳຂອງຫລັກຊັບມີໄວ້ເພື່ອຂາຍ.
- ຄັງສຳຮອງຕາມລະບຽບການ, ເຊິ່ງຖືກສ້າງຂຶ້ນຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ລາຍລະອຽດຢູ່ເອກະສານຊ້ອນທ້າຍ 27.

2. ນະໂຍບາຍການບັນຊີ (ຕໍ່)

2.6 ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

2.6.18 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດຫລັງອອກການ

ຜົນປະໂຫຍດຫລັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານທະນາຄານ ຜູ້ທີ່ກະສຽນ ໂດຍຄັງສຳຮອງເງິນບຳເນັດ ທີ່ທະນາຄານສ້າງຂຶ້ນ. ນະໂຍບາຍຂອງທະນາຄານແມ່ນຫັກຈາກເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ ເພື່ອເກັບຮັກສາໄວ້. ປັດຈຸບັນນີ້ ແມ່ນໃຊ້ອັດຕາ 8.00% ຈາກເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ. ທະນາຄານບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບຫລັງອອກການຂອງພະນັກງານ.

ຜົນປະໂຫຍດຈາກການຍົກເລີກສັນຍາ

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານສະບັບປັບປຸງ ເລກທີ 43/ສພຊ ທີ່ອອກໂດຍປະທານປະເທດແຫ່ງ ສປປ ລາວ ໃນວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ່ທີ່ຖືກຍົກເລີກສັນຍາຍ້ອນກໍລະນີດັ່ງລຸ່ມນີ້:

► ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫລື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;

► ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານເພື່ອປັບປຸງອົງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສຳລັບການສິ້ນສຸດສັນຍາຈ້າງງານຂອງລາຍລະອຽດທີ່ກ່າວຂ້າງເທິງນັ້ນ, ທະນາຄານຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2015 ບໍ່ມີພະນັກງານທະນາຄານຖືກໄລ່ອອກຍ້ອນສາເຫດຂ້າງເທິງດັ່ງນັ້ນ, ທະນາຄານຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງທະນາຄານ.

2.6.19 ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ, ແຕ່ຍັງບໍ່ມີຜົນບັງຄັບໃຊ້, ຈົນຮອດມື້ອອກເອກະສານລາຍງານການເງິນສະບັບນີ້ແມ່ນໄດ້ຖືກເປີດເຜີຍຂ້າງລຸ່ມ. ທະນາຄານມີຄວາມຕັ້ງໃຈທີ່ຈະນຳໃຊ້ບັນດາມາດຕະຖານເຫລົ່ານີ້ ເມື່ອມີຜົນນຳໃຊ້ໄດ້ຢ່າງເປັນທາງການ.

IFRS 9 ເຄື່ອງມືການເງິນ

ໃນເດືອນ ກໍລະກົດ 2014, ຄະນະກຳມະການກຳນົດມາດຕະຖານບັນຊີສາກົນ IASB ໄດ້ປະກາດໃຊ້ມາດຕະຖານສາກົນດ້ານການລາຍງານ ເລກທີ 9 ເຄື່ອງມືທາງການເງິນ ເຊິ່ງໄດ້ມີຜົນຕໍ່ເຄື່ອງມືທາງການເງິນທັງໝົດ ແລະ ປ່ຽນແທນມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 9 ສະບັບເກົ່າ. ມາດຕະຖານໄດ້ແນະນຳວິທີໃນການຈັດປະເພດ ແລະ ການວັດແທກມູນຄ່າ, ການຫັກຄ່າເຊື່ອມ ແລະ ການບັນຊີ. ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 9 ມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2018. ຮູບແບບການລາຍງານແບບເກົ່າແມ່ນຕ້ອງຖືກນຳໃຊ້, ແຕ່ຂໍ້ມູນສົມທຽບແມ່ນບໍ່ໄດ້ບັງຄັບໃຊ້. ການຮັບເອົາມາດຕະຖານສາກົນດ້ານການລາຍງານ ເລກທີ 9 ຈະມີຜົນຕໍ່ການຈັດປະເພດ ແລະ ການວັດແທກມູນຄ່າຂອງຊັບສິນທາງການເງິນຂອງທະນາຄານ, ແຕ່ບໍ່ມີຜົນໃນການຈັດປະເພດ ແລະ ການວັດແທກມູນຄ່າຂອງໜີ້ສິນຂອງທະນາຄານ.

3. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

	2015 *ລ້ານກີບ*	*2014* *ລ້ານກີບ*
ລາຍຮັບດອກເບ້ຍຈາກການປ່ອຍກູ້ແກ່ລູກຄ້າ	933,530	900,677
ລາຍຮັບດອກເບ້ຍຈາກເງິນຝາກທະນາຄານອື່ນໆ	9,664	14,533
ລາຍຮັບດອກເບ້ຍຈາກ ການລົງທຶນໃນຫຼັກຊັບ	81,650	37,494
ລາຍຮັບດອກເບ້ຍອື່ນໆ ແລະ ລາຍຮັບອື່ນໆທີ່ຄ້າຍຄືກັນ	48,766	51,050
	1,073,610	**1,003,754**

4. ລາຍຮັບດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ

	2015 *ລ້ານກີບ*	*2014* *ລ້ານກີບ*
ລາຍຈ່າຍດອກເບ້ຍເງິນຝາກຂອງທະນາຄານ	27,427	8,701
ລາຍຈ່າຍດອກເບ້ຍເງິນຝາກຂອງລູກຄ້າ	785,543	669,350
ລາຍຈ່າຍດອກເບ້ຍອື່ນໆ ແລະ ລາຍຈ່າຍອື່ນໆທີ່ຄ້າຍຄືກັນ	-	11,558
	812,970	**689,609**

5. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2015 *ລ້ານກີບ*	*2014* *ລ້ານກີບ*
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ການບໍລິການຊຳລະເງິນ	106,908	90,805
ກິດຈະກຳສິນເຊື່ອ	60,519	48,640
ການດຳເນີນງານອື່ນໆ	4,121	3,365
	171,548	**142,810**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ການບໍລິການຊຳລະເງິນ	(10,707)	(10,140)
ການດຳເນີນງານອື່ນໆ	(2,607)	(1,391)
	(13,314)	**(11,531)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**158,234**	**131,279**

6. ກຳໄລ/(ຂາດທຶນ)ສຸດທິທາງການຄ້າ

	2015 *ລ້ານກີບ*	*2014* *ລ້ານກີບ*
ລາຍຮັບສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ	41,002	54,774
ກຳໄລ/(ຂາດທຶນ) ຈາກການຄ້າ	(287,150)	33,274
ການປ່ຽນແປງໃນມູນຄ່າຍຸດຕິທຳຂອງຊັບສິນທາງການເງິນທີ່ຖືໄວ້ເພື່ອການຄ້າ	(993)	95
ລາຍຮັບເງິນປັນຜົນຈາກຊັບສິນທາງການເງິນທີ່ຖືໄວ້ເພື່ອການຄ້າ	258	42
	(246,883)	**88,185**

7. ລາຍຮັບອື່ນໆຈາກການດຳເນີນງານ

	2015 *ລ້ານກີບ*	*2014* *ລ້ານກີບ*
ລາຍຮັບເງິນປັນຜົນ	12,413	13,662
ລາຍຮັບອື່ນໆຈາກການບໍລິການທາງການເງິນ	-	556
ລາຍຮັບຈາກການຂາຍຊັບສິນບັດຄົງທີ່ອອກ (*)	359,076	534
ເກັບຄືນໜີ້ສູນທີ່ສະສາງອອກ	49,731	358
ອື່ນໆ	1,040	3,119
	422,260	**18,229**

(*): ຈຳນວນດັ່ງກ່າວລວມເອົາກຳໄລຈຳນວນ 355,022 ລ້ານກີບ ຈາກການຂາຍສິດນຳໃຊ້ທີ່ດິນ 36 ຕອນໃຫ້ທະນາຄານແຫ່ງ ສປປ ລາວ *(ເອກະສານຊ້ອນທ້າຍເລກທີ 31)*.

8. (ເກັບຄືນ)/ລາຍຈ່າຍຈາກການຄ່າເຊື່ອມສຳລັບການລົງທຶນທາງດ້ານການເງິນ

	2015 *ລ້ານກີບ*	*2014* *ລ້ານກີບ*
ເກັບຄືນການເຊື່ອມຄ່າຈາກການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ (ບົດອະທິບາຍ ເລກທີ 16)	(1,837)	(27,086)
ເກັບຄືນຄ່າເຊື່ອມມູນຄ່າຈາກຫຼັກຊັບມີໄວ້ເພື່ອຂາຍ	-	(151)
	(1,837)	**(27,237)**

9. ລາຍຈ່າຍພະນັກງານ

	2015 *ລ້ານກີບ*	*2014* *ລ້ານກີບ*
ເງິນເດືອນ	125,780	120,328
ຄ່າປະກັນໄພສຳລັບພະນັກງານ	89,438	19,390
ຄ່າໃຊ້ຈ່າຍອື່ນໆກ່ຽວກັບພະນັກງານ	5,501	73,215
	220,719	**212,933**

10. ລາຍຈ່າຍອື່ນໆຈາກການດຳເນີນງານ

	2015 *ລ້ານກີບ*	*2014* *ລ້ານກີບ*
ນ້ຳມັນ ແລະ ການເດີນທາງ	3,435	4,040
ການສຶກສາ ແລະ ການຝຶກອົບຮົມ	1,780	2,060
ປະກັນໄພເງິນຝາກ	18,697	15,321
ການສື່ສານ	1,803	1,677
ໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມ	9,943	12,081
ສ້ອມແປງ ແລະ ບຳລຸງຮັກສາ	14,165	14,210
ວັດຖຸອຸປະກອນຕ່າງໆ	5,913	5,603
ໄຟຟ້າ ແລະ ນ້ຳປະປາ	6,810	6,069
ເຊົ່າຫ້ອງການ	8,134	8,307
ອື່ນໆ	27,005	16,006
	97,685	**85,374**

11. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (ທຫລ)

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນສົດໃນກຳມືເປັນເງິນກີບ	1,246,264	983,025
ເງິນສົດໃນກຳມືເປັນເງິນຕາຕ່າງປະເທດ	990,378	1,015,741
ແຊັກແລກເງິນ ແລະ ອື່ນໆ	-	13
ຍອດເຫລືອຢູ່ທະນາຄານການ		
- ເງິນຝາກພາກບັງຄັບ	1,134,906	925,320
- ເງິນຝາກກະແສລາຍວັນ	6,095,242	4,322,473
- ເງິນຝາກມີກຳນົດ	-	24,655
- ດອກເບ້ຍຄ້າງຮັບ	-	27
	9,466,790	**7,271,254**

ຍອດເຫລືອກັບທະນາຄານການປະກອບດ້ວຍການຊຳລະສະສາງ, ເງິນຝາກບັງຄັບ ແລະ ເງິນຝາກມີກຳນົດ. ຍອດເຫລືອເຫລົ່ານີ້ບໍ່ມີອັດຕາດອກເບ້ຍ.

11. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (ທຫລ) (ຕໍ່)

ພາຍໃຕ້ລະບຽບການຂອງທະນາຄານກາງ, ທະນາຄານຖືກຮຽກຮ້ອງໃຫ້ຮັກສາຄັງສະສົມເງິນສົດກັບທະນາຄານກາງໃນຮູບແບບເງິນຝາກບັງຄັບ, ຊຶ່ງຖືກຄິດໄລ່ 5.00% ແລະ 10.00%, ໃນທຸກໆສອງເດືອນ (2014: 5.00% ແລະ 10.00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດຕ່ຳກວ່າ 12 ເດືອນ, ເປັນເງິນກີບ ແລະ ເປັນສະກຸນເງິນຕາຕ່າງປະເທດ, ຕາມລຳດັບ. ພາຍໃນປີ ທະນາຄານໄດ້ຮັກສາຍອດເງິນຝາກພາກບັງຄັບໃນມູນຄ່າທີ່ຖືກຕ້ອງຕາມກົດລະບຽບຂອງທະນາຄານກາງ.

12. ໜີ້ຕ້ອງຮັບຈາກທະນາຄານ

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**1,659,680**	**2,268,162**
- ເປັນເງິນກີບ	1,390,194	14,146
- ເປັນເງິນຕາຕ່າງປະເທດ	269,486	2,254,016
ເງິນຝາກມີກຳນົດ	**325,797**	**1,495,220**
- ເປັນເງິນກີບ	142,806	20,000
- ເປັນເງິນຕາຕ່າງປະເທດ	182,991	1,475,220
ເງິນກູ້ຢືມຈາກທະນາຄານອື່ນໆ	**-**	**10,100**
- ເປັນເງິນກີບ	-	-
- ເປັນເງິນຕາຕ່າງປະເທດ	-	10,100
ດອກເບ້ຍຄ້າງຮັບ	**1,158**	**716**
	1,986,635	**3,774,198**

13. ເງິນກູ້ໃຫ້ລູກຄ້າ

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນກູ້ໃຫ້ລູກຄ້າທັງໝົດ	11,026,334	9,728,396
ດອກເບ້ຍຄ້າງຮັບ	97,369	93,822
ລົບຄັງແຮ່ຄ່າເຊື່ອມສຳລັບໜີ້ເສຍ *(ບົດອະທິບາຍເລກທີ 14)*	(268,748)	(199,313)
	10,854,955	**9,622,905**

13.1 ເງິນກູ້ໃຫ້ລູກຄ້າ

ການວິເຄາະຕາມສະກຸນເງິນ:

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນກູ້ ເປັນເງິນກີບ	4,513,088	4,153,691
ເງິນກູ້ ເປັນເງິນໂດລາ	5,177,960	4,232,963
ເງິນກູ້ ເປັນເງິນບາດ	1,335,286	1,341,742
	11,026,334	**9,728,396**

13 ເງິນກູ້ໃຫ້ລູກຄ້າ (ຕໍ່)

13.1 ເງິນກູ້ໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍສຳລັບເງິນກູ້ທາງການຄ້າພາຍໃນປີ ມີດັ່ງລຸ່ມນີ້:

	2015 *ອັດຕາດອກເບ້ຍ* *% ຕໍ່ປີ*	*2014* *ອັດຕາດອກເບ້ຍ* *% ຕໍ່ປີ*
ເງິນກູ້ ເປັນເງິນກີບ	7.00% - 16.00%	9.00% - 16.00%
ເງິນກູ້ ເປັນເງິນໂດລາ	6.50% - 14.00%	5.50% - 14.00%
ເງິນກູ້ ເປັນເງິນບາດ	7.75% - 12.00%	7.75% - 12.75%

ການວິເຄາະຕາມມື້ຄົບກຳນົດເດີມ:

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນກູ້ໄລຍະສັ້ນ	2,350,521	2,706,990
ເງິນກູ້ໄລຍະກາງ	5,674,920	5,393,627
ເງິນກູ້ໄລຍະຍາວ	3,000,893	1,627,779
	11,026,334	**9,728,396**

ການຈັດຊັ້ນເງິນກູ້ໃນວັນທີ 31 ທັນວາ 2015 ມີດັ່ງນີ້:

ການຈັດຊັ້ນຄວາມສ່ຽງ	*ຍອດໜີ້* *ລ້ານກີບ*	*ເງິນເຮ* *ລ້ານກີບ*	*ອັດຕາຫັກເງິນເຮ/* *ຍອດໜີ້* *%*
ໜີ້ປົກກະຕິ	9,106,677	18,250	0.20%
ໜີ້ຄວນເອົາໃຈໃສ່	1,630,590	80,285	4.92%
ໜີ້ຕ່ຳກວ່າມາດຕະຖານ	27,742	2,224	8.02%
ໜີ້ສົງໃສ	184,498	112,357	60.90%
ໜີ້ສູນ	76,827	55,632	72.41%
	11,026,334	**268,748**	

13 ເງິນກູ້ໃຫ້ລູກຄ້າ (ຕໍ່)

13.1 ເງິນກູ້ໃຫ້ລູກຄ້າ (ຕໍ່)

ເງິນກູ້ໃນທ້າຍປີປະກອບດ້ວຍເງິນກູ້ໃຫ້ແກ່ແຕ່ລະຂະແໜງທຸລະກິດ ດັ່ງລຸ່ມນີ້:

	31 ທັນວາ 2015		*31 ທັນວາ 2014*	
	ລ້ານກີບ	*%*	*ລ້ານກີບ*	*%*
ຂະແໜງ ອຸດສາຫະກຳ	2,395,765	21.73%	1,545,510	15.89%
ຂະແໜງ ກໍ່ສ້າງ	3,526,539	31.98%	3,385,094	34.80%
ຂະແໜງ ປະກອບວັດຖຸເຕັກນິກ	93,269	0.85%	53,409	0.55%
ຂະແໜງ ກະສິກຳ - ປ່າໄມ້	31,414	0.28%	39,021	0.40%
ຂະແໜງ ການຄ້າ	3,031,544	27.49%	2,621,496	26.95%
ຂະແໜງ ຂົນສົ່ງໄປສະນີ	573,180	5.20%	713,939	7.34%
ຂະແໜງ ບໍລິການ	1,228,065	11.14%	1,178,883	12.12%
ຂະແໜງ ຫັດຖະກຳ	10,468	0.09%	4,541	0.04%
ຂະແໜງ ອື່ນໆ	136,090	1.23%	186,503	1.91%
	11,026,334	**100%**	**9,728,396**	**100%**

14. **ເງິນແຮສຳລັບການເຊື່ອມຄ່າຂອງໜີ້ເສຍເງິນກູ້ໃຫ້ແກ່ທະນາຄານ ແລະ ລູກຄ້າ**

ການປ່ຽນແປງເງິນແຮສຳລັບການເຊື່ອມຄ່າຂອງໜີ້ເສຍເງິນກູ້ໃຫ້ແກ່ລູກຄ້າປະກອບມີດັ່ງນີ້:

	ເງິນແຮສຳລັບການເຊື່ອມຄ່າຂອງ ໜີ້ເສຍເງິນກູ້ໃຫ້ແກ່ລູກຄ້າ ລ້ານກີບ
ຍອດເຫຼືອ ນະວັນທີ 1 ມັງກອນ 2015	**199,313**
ການປ່ຽນແປງສຸດທິພາຍໃນປີ	114,455
ລົບລ້າງໜີ້ສູນ	(36,579)
ສ່ວນຜິດຕ່ຽງເງິນຕາຕ່າງປະເທດ	(8,441)
ຍອດເຫຼືອນະວັນທີ 31 ທັນວາ 2015	**268,748**

ແຍກເງິນແຮໜີ້ເສຍສຳລັບເງິນກູ້ໃຫ້ລູກຄ້ານະວັນທີ 31ທັນວາ 2015 ແລະ 31ທັນວາ 2014 ມີດັ່ງນີ້:

	31 ທັນວາ 2015		*31 ທັນວາ 2014*	
	ຍອດເຫຼືອ ລ້ານກີບ	*ເງິນແຮ ລ້ານກີບ*	*ຍອດເຫຼືອ ລ້ານກີບ*	*ເງິນແຮ ລ້ານກີບ*
ຫັກເງິນແຮເປັນບຸກຄົນ	1,694,825	210,793	2,497,162	195,534
ຫັກເງິນແຮເປັນກຸ່ມ	9,331,509	57,955	7,231,234	3,779
	11,026,334	**268,748**	**9,728,396**	**199,313**

15. ການລົງທຶນທາງການເງິນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ຫຼັກຊັບປະເພດທຶນທີ່ອອກໂດຍນິຕິບຸກຄົນພາຍໃນປະເທດ (*)	224,348	202,776
ຫຼັກຊັບທີ່ອອກໂດຍສະຖາບັນສິນເຊື່ອຕ່າງປະເທດ	-	19,556
	224,348	**222,332**

(*): ລາຍການເຫຼົ່ານີ້ ແມ່ນຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL) ເຊິ່ງຮຸ້ນເຫຼົ່ານີ້ມີມູນຄ່າໜ້າບັດທັງໝົດ ແມ່ນ 181,204 ລ້ານກີບ (ວັນທີ 31 ທັນວາ 2014: 123,679 ລ້ານກີບ).

16. ການລົງທຶນທາງການເງິນຖືໄວ້ຈົນເຖິງມື້ຄົບກຳນົດ

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ມູນຄ່າຫຼຸດລົງຕາມຕົ້ນທຶນຂອງພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ	982,563	759,871
ມູນຄ່າຫຼຸດລົງຕາມຕົ້ນທຶນຂອງພັນທະບັດທີ່ອອກໂດຍກະຊວງການເງິນ	795,802	510,655
	1,778,365	**1,270,526**
ຄ່າເຊື່ອມມູນຄ່າໜີ້ເສຍການລົງທຶນທາງການເງິນຖືໄວ້ຈົນເຖິງມື້ຄົບກຳນົດ (*)	(1,957)	(3,794)
- *ຄ່າເຊື່ອມມູນຄ່າຈາກພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ*	*(2)*	*(856)*
- *ຄ່າເຊື່ອມມູນຄ່າຈາກພັນທະບັດທີ່ອອກໂດຍກະຊວງການເງິນ*	*(1,955)*	*(2,938)*
	1,776,408	**1,266,732**

(*): ປ່ຽນແປງສຸດທິຈາກການເຊື່ອມຄ່າໜີ້ເສຍຈຳນວນ 1,837 ລ້ານກີບ ແມ່ນບັນທຶກໃນໃບລາຍງານຜົນໄດ້ຮັບລວມກິດຈະການຢູ່ໃນປະເພດເກັບຄືນຄ່າເຊື່ອມໜີ້ເສຍສຳລັບຫຼັກຊັບປະເພດຖືໄວ້ຈົນເຖິງມື້ຄົບກຳນົດ (ບົດອະທິບາຍຊ້ອນທ້າຍ ເລກທີ 8).

16. ການລົງທຶນທາງການເງິນຖືໄວ້ຈົນເຖິງມື້ຄົບກຳນົດ (ຕໍ່)

16.1. ພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ

ລາຍລະອຽດຂອງພັນທະບັດຄັງເງິນ ນະວັນທີ 31 ທັນວາ 2015 ມີດັ່ງນີ້:

ໄລຍະເວລາ	*ວັນທີ ອອກພັນທະບັດ*	*ວັນຄົບກຳນົດ*	*ມູນຄ່າໃນນາມ (ລ້ານກີບ)*	*ມູນຄ່າຕາມການຫຼຸດຕົ້ນທຶນລົງ (ລ້ານກີບ)*	*ອັດຕາດອກເບ້ຍຕໍ່ປີ (ອັດຕາດອກເບ້ຍໃນນາມ)*
1 ປີ	27 ມີນາ 2015	27 ມີນາ 2016	300,000	303,522	4.50%
1 ປີ	10 ມີນາ 2015	10 ມີນາ 2016	73,000	75,645	4.50%
1 ປີ	31 ມີນາ 2015	31 ມີນາ 2016	50,000	51,681	4.50%
1 ປີ	28 ເມສາ 2015	28 ເມສາ 2016	20,000	20,603	4.50%
1 ປີ	12 ພຶດສະພາ 2015	12 ພຶດສະພາ 2016	10,000	10,284	4.50%
1 ປີ	25 ພຶດສະພາ 2015	25 ພຶດສະພາ 2016	58,000	59,555	4.50%
1 ປີ	27 ພະຈິກ 2015	27 ພະຈິກ 2016	300,000	301,095	4.00%
1 ປີ	18 ທັນວາ 2015	18 ທັນວາ 2016	100,000	100,139	4.00%
1 ປີ	25 ທັນວາ 2015	25 ທັນວາ 2016	60,000	60,039	4.00%
		ລວມ	**971,000**	**982,563**	

16.2. ພັນທະບັດທີ່ອອກໂດຍ ກະຊວງການເງິນ

	31 ທັນວາ 2015 ລ້ານກີບ	*31 ທັນວາ 2014 ລ້ານກີບ*
ພັນທະບັດອ່ອຍໜີ້ສາມແຈ	16,714	265,511
ພັນທະບັດທຶນ	65,923	64,558
ພັນທະບັດອື່ນໆ	713,165	180,586
	795,802	**510,655**

ພັນທະບັດອ່ອຍໜີ້ສາມແຈແມ່ນພັນທະບັດທີ່ອອກໂດຍກະຊວງການເງິນເພື່ອຊຳລະສະສາງໜີ້ຂອງກະຊວງການເງິນ ຫລື ສະສາງໜີ້ຂອງລູກຄ້າທີ່ກະຊວງການເງິນເປັນລູກໜີ້. ພັນທະບັດດັ່ງກ່າວບໍ່ສາມາດໂອນໃຫ້ຄົນອື່ນ. ກະຊວງການເງິນສາມາດຕໍ່ອາຍຸອອກໄປໄດ້ພັນທະບັດດັ່ງກ່າວມີອາຍຸ 17 ປີ ແລະ ບໍ່ມີດອກເບ້ຍ.

ພັນທະບັດທຶນ ທີ່ອອກໂດຍກະຊວງການເງິນ ເພື່ອເພີ່ມທຶນຈົດທະບຽນໃຫ້ກັບທະນາຄານ ມີລາຍລະອຽດດັ່ງຕໍ່ໄປນີ້:

ວັນທີ ອອກພັນທະບັດ	*ມູນຄ່າໜ້າບັດ (ລ້ານກີບ)*	*ມູນຄ່າຕາມການຫຼຸດຕົ້ນທຶນລົງ (ລ້ານກີບ)*	*ໄລຍະເວລາ*	*ອັດຕາດອກເບ້ຍ (% ຕໍ່ປີ)*
1 ມີນາ 2014	68,600	65,923	5 ປີ	4.00%

16. ການລົງທຶນທາງການເງິນຖືໄວ້ຈົນເຖິງມື້ຄົບກຳນົດ (ຕໍ່)

16.2. ພັນທະບັດທີ່ອອກໂດຍ ກະຊວງການເງິນ (ຕໍ່)

ພັນທະບັດອື່ນໆທີ່ອອກໂດຍກະຊວງການເງິນແມ່ນພັນທະບັດຮຸ້ນກູ້ສຳລັບຄ້ຳປະກັນໃຫ້ແກ່ໂຄງການກໍ່ສ້າງຂົວ ເມືອງປາກ ລາຍ (ໃນມູນຄ່າທັງໝົດ 46,000 ລ້ານກີບ) ລາຍລະອຽດຂອງພັນທະບັດມີດັ່ງນີ້:

ວັນທີ ອອກພັນທະບັດ	*ວັນຄົບກຳນົດ*	*ມູນຄ່າໜ້າບັດ ລ້ານກີບ*	*ມູນຄ່າຫຼຸດລົງ ຕາມຕົ້ນທຶນ ລ້ານກີບ*	*ອັດຕາດອກເບ້ຍ (% ຕໍ່ປີ)*
5 ທັນວາ 2011	5 ທັນວາ 2016	46,000	46,252	8.00%
25 ທັນວາ 2013	10 ຕຸລາ 2016	2,000	1,922	4.00%
2 ມີນາ 2012	20 ທັນວາ 2016	50,000	49,357	4.00%
16 ສິງຫາ 2012	12 ມີນາ 2016	20,000	20,230	3.00%
7 ພຶດສະພາ 2014	12 ພະຈິກ 2016	8,000	6,875	4.00%
30 ກໍລະກົດ 2014	31 ກໍລະກົດ 2016	5,000	4,748	3.50%
29 ກັນຍາ 2014	7 ພຶດສະພາ 2016	22,000	21,031	3.50%
29 ກັນຍາ 2014	11 ມິຖຸນາ 2016	9,000	8,468	3.50%
29 ກັນຍາ 2014	12 ມິຖຸນາ 2016	25,000	23,513	3.50%
29 ກັນຍາ 2014	13 ມິຖຸນາ 2016	1,000	940	3.50%
29 ກັນຍາ 2014	16 ພຶດສະພາ 2016	5,000	4,759	3.50%
29 ກັນຍາ 2014	18 ກັນຍາ 2016	4,000	3,629	3.50%
27 ພະຈິກ 2014	31 ກໍລະກົດ 2016	2,000	1,867	3.50%
18 ທັນວາ 2014	2 ສິງຫາ 2016	14,000	13,009	3.50%
27 ກຸມພາ 2015	11 ມິຖຸນາ 2016	2,000	1,380	3.50%
30 ທັນວາ 2014	30 ທັນວາ 2016	150,000	150,019	4.75%
30 ທັນວາ 2014	30 ທັນວາ 2017	100,000	100,014	5.10%
8 ເມສາ 2014	8 ເມສາ 2016	100,000	102,978	4.50%
26 ສິງຫາ 2014	26 ສິງຫາ 2016	100,000	101,535	4.50%
16 ກັນຍາ 2014	16 ກັນຍາ 2016	50,000	50,639	4.50%
		715,000	**713,165**	

17. ການລົງທຶນໃນບໍລິສັດຮ່ວມທຶນ

	2015 ລ້ານກີບ	*2014 ລ້ານກີບ*
ຍອດເຫຼືອນະວັນທີ 1 ມັງກອນ	534,430	353,417
ເພີ່ມການລົງທຶນພາຍໃນປີ	-	147,000
ການປ່ຽນແປງຂອງການລົງທຶນ	(1,286)	-
ສ່ວນແບ່ງສຸດທິຈາກກຳໄລພາຍໃນປີໂດຍນຳໃຊ້ວິທີຕາມຕົ້ນທຶນ	48,325	43,146
ຮຸ້ນຂອງບໍລິສັດຮ່ວມທຶນໃນລາຍຮັບອື່ນໆນອກການທຸລະກິດ ໂດຍນຳໃຊ້ວິທີຕາມຕົ້ນທຶນ	(272)	272
ລົບ: ເງິນປັນຜົນໄດ້ຮັບພາຍໃນປີ	(25,779)	(9,405)
ຍອດເຫຼືອນະວັນທີ 31 ທັນວາ	**555,418**	**534,430**

17. ການລົງທຶນໃນບໍລິສັດຮ່ວມທຶນ (ຕໍ່)

ການລົງທຶນໃນບໍລິສັດຮ່ວມທຶນ

	31 ທັນວາ 2015				*31 ທັນວາ 2014*			
	ຕົ້ນທຶນ ໂດລາ	*ຕົ້ນທຶນ ທຽບເທົ່າ ລ້ານກີບ*	*ມູນຄ່າ ຕາມບັນຊີ ລ້ານກີບ*	*% ທຶນ ຂອງທະ ນາຄານ*	*ຕົ້ນທຶນ ໂດລາ*	*ຕົ້ນທຶນ ທຽບເທົ່າ ລ້ານກີບ*	*ມູນຄ່າ ຕາມບັນຊີ ລ້ານກີບ*	*% ທຶນ ຂອງທະ ນາຄານ*
ການລົງທຶນໃນສາຖະບັນ ການເງິນອື່ນ								
ທະນາຄານຮ່ວມທຸລະ ກິດລາວ - ຫວຽດ	24,500,000	197,839	248,855	25%	24,500,000	199,125	236,706	35%
ທະນາຄານລາວ-ຝຣັ່ງ ຈຳກັດ	16,322,230	138,000	140,297	46%	16,322,230	138,000	137,967	46%
ທະນາຄານລາວ- ຈີນ	N/A	147,000	148,360	49%	N/A	147,000	145,970	49%
ການລົງທຶນໃນນິຕິບຸກຄົນ ພາຍໃນປະເທດ								
ບໍລິສັດປະກັນໄພ ລາວ-ຫວຽດ	1,050,000	8,784	17,906	35%	1,050,000	8,784	13,787	35%
		491,623	**555,418**			**492,909**	**534,430**	

- ທະນາຄານຮ່ວມທຸລະກິດລາວ-ຫວຽດ (LVB) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫລວງວຽງຈັນ ແລະ ດຳເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມທຶນກັບ ທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນທຸລະກິດຢູ່ ສສ ຫວຽດນາມ. ທະນາຄານດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກ ໂດຍທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30ປີ. ໃນປີ 2015 ທະນາຄານຮ່ວມທຸລະກິດລາວ-ຫວຽດໄດ້ເພີ່ມທຶນ ຈົດທະບຽນເປັນ 791,357,560,000 ກີບ. ອັດຕາຄວາມເປັນເຈົ້າຂອງທະນາຄານທຸລະກິດລາວ-ຫວຽດ ຫຼັງຈາກເພີ່ມທຶນ ແມ່ນ 25% ພາຍໃຕ້ໃບອະນຸຍາດລົງທຶນເລກທີ 004-15/KH-DDT4 ອອກໂດຍກະຊວງແຜນການ ແລະ ການລົງທຶນ ລົງ ວັນທີ 24 ສິງຫາ 2015 ທຽບເທົ່າກັບ 197,839,390,000 ກີບ.

- ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫລວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍໄດ້ ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດ ທີ່ດຳເນີນທຸລະກິດຢູ່ ປາຣີ, ປະເທດ ຝຣັ່ງ. BFL ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊົ່ວຄາວ ລົງວັນທີ 1 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດ ໝາຍຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມປົດບັນຍັດຂອງປະທານ ປະເທດອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ. ນະວັນ ທີ 31 ທັນວາ 2015 ທຄຕລ ໄດ້ປະກອບທຶນທັງໝົດໃນມູນຄ່າ 1,840,000 ໂດລາ ແລະ 122,854,960,000 ກີບ.

17. ການລົງທຶນໃນບໍລິສັດຮ່ວມທຶນ (ຕໍ່)

- ບໍລິສັດປະກັນໄພລາວ-ຫວຽດ (LVI) ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຫຸ້ນສ່ວນຢູ່ ສປປ ລາວ, ສະໜອງການບໍລິການທາງດ້ານການປະກັນໄພພາຍໃຕ້ໃບອະນຸຍາດການລົງທຶນເລກທີ. 077/08/FIMC ອອກໂດຍຄະນະກຳມະການຄຸ້ມຄອງການລົງທຶນຕ່າງປະເທດ ລົງວັທີ 09 ມິຖຸນາ 2008 ເປັນການຮ່ວມທຶນກັບບໍລິສັດຫຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວ - ຫວຽດ. ທຶນຈົດທະບຽນຕາມກົດໝາຍຂອງບໍລິສັດແມ່ນ 3,000,000 ໂດລາ ແລະ ຖືກຖອກໂດຍຂາຮຸ້ນຢ່າງເຕັມສ່ວນໃນວັນທີ 17 ກໍລະກົດ 2008. ໃນປີ 2013 ທະນາຄານໄດ້ປະກອບທຶນເພີ່ມເຕີ່ມ 180,000 ໂດລາ ໃນວັນທີ 2 ກັນຍາ 2013. ນະວັນທີ 31 ທັນວາ 2015 ທະນາຄານໄດ້ປະກອບທຶນເປັນຈຳນວນ 1,050,000 ໂດລາ ຫຼື ທຽບເທົ່າ 8,784 ລ້ານກີບ.

- ທະນາຄານ ລາວ-ຈີນ ຈຳກັດ (LCNB) ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນການຢູ່ປະເທດຈີນ. LCNB ດຳເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຂອງ LCNB ແມ່ນ 300,000 ລ້ານກີບ ແລະ ນະວັນທີ 31 ທັນວາ 2015 ໄດ້ຮັບການປະກອບທຶນຈາກຂາຮຸ້ນເຕັມມູນຄ່າ.

18. ຊັບສິນບັດ ແລະ ອຸປະກອນ

ການເຄື່ອນໄຫວຂອງຊັບສິນບັດ ແລະ ອຸປະກອນ ນະວັນທີ 31 ທັນວາ 2015 ມີດັ່ງລຸ່ມນີ້:

	ອາຄານ ແລະ ການປັບປຸງ ລ້ານກີບ	*ອຸປະກອນ ຫ້ອງການ ລ້ານກີບ*	*ເຟີນີເຈີ້ ແລະ ສິ່ງຕິດຕັ້ງ ລ້ານກີບ*	*ພາຫະນະ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:					
ນະວັນທີ 1 ມັງກອນ 2015	212,392	119,240	28,096	18,428	378,156
ຊື້ເພີ່ມ	163,840	18,597	6,246	2,045	190,728
ປະກອບມີ					
ຊື້ເພີ່ມ	18,580	18,105	6,246	2,045	44,976
ໂອນຈາກຊັບສິນພວມກໍ່ສ້າງ ແລະ ຊັບສິນພວມຊື້	145,260	492	-	-	145,752
ສະສາງອອກ	(1,309)	(21,273)	(604)	(4,138)	(27,324)
ນະວັນທີ 31 ທັນວາ 2015	374,923	116,564	33,738	16,335	541,560
ຫລຸ້ຍຫ້ຽນສະສົມ:					
ນະວັນທີ 1 ມັງກອນ 2015	55,105	53,244	10,785	8,629	127,763
ຫລຸ້ຍຫ້ຽນໃນປີ 2015	17,250	24,064	3,690	3,499	48,503
ສະສາງອອກ	(849)	(21,187)	(10)	(3,806)	(25,852)
ນະວັນທີ 31 ທັນວາ 2015	71,506	56,121	14,465	8,322	150,414
ມູນຄ່າຍັງເຫລືອສຸດທິ:					
ນະວັນທີ 1 ມັງກອນ 2015	157,287	65,996	17,311	9,799	250,393
ນະວັນທີ 31 ທັນວາ 2015	303,417	60,443	19,273	8,013	391,146

19. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ນະວັນທີ 31 ທັນວາ 2015 ມີດັ່ງລຸ່ມນີ້:

	ສິດນຳໃຊ້ທີ່ດິນ ລ້ານກີບ	*ໂປຼແກຼມ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:			
ວັນທີ 1 ມັງກອນ 2015	227,075	78,372	305,447
ຊື້ເພີ່ມ	45,879	7,618	53,497
ປະກອບມີ			
ຊື້ເພີ່ມ	654	6,458	7,112
ໂອນຈາກຊັບສິນພວມກໍ່ສ້າງ ແລະ ຊັບສິນພວມຊື້	45,225	1,160	46,385
ສະສາງອອກ	(11,360)	(5,234)	(16,594)
ວັນທີ 31 ທັນວາ 2015	261,594	80,756	342,350
ຫລຸ້ຍຫ້ຽນສະສົມ:			
ວັນທີ 1 ມັງກອນ 2015	-	33,878	33,878
ຫລຸ້ຍຫ້ຽນໃນປີ 2015	-	15,962	15,962
ສະສາງອອກ	-	(5,234)	(5,234)
ວັນທີ 31 ທັນວາ 2015	-	44,606	44,606
ມູນຄ່າຍັງເຫລືອສຸດທິ:			
ວັນທີ 1 ມັງກອນ 2015	227,075	44,494	271,569
ວັນທີ 31 ທັນວາ 2015	261,594	36,150	297,744

20. ຊັບສິນອື່ນໆ

	31 ທັນວາ 2015 ລ້ານກີບ	*31 ທັນວາ 2014 ລ້ານກີບ*
ຊັບສິນລໍຖ້າຂາຍ	8,483	5,094
ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ	1,192	1,076
ແຊ້ກຮຽກເກັບ	13,234	9,381
ຊັບສິນບັດກຳລັງຊື້ ແລະ ກໍ່ສ້າງ	123,372	196,907
ລາຍຈ່າຍລ່ວງໜ້າລໍຖ້າແບ່ງປັນ	34,122	34,115
ໜີ້ຕ້ອງຮັບອື່ນໆ	30,708	18,868
	211,111	**265,441**

21. ໜີ້ຕ້ອງສົ່ງທະນາຄານອື່ນ

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນຝາກກະແສລາຍວັນຢຸ່ທະນາຄານອື່ນ	**2,104,890**	**1,610,072**
- ເປັນເງິນກີບ	825,086	893,584
- ເປັນເງິນຕາຕ່າງປະເທດ	1,279,804	716,488
ເງິນຝາກປະຢັດຢຸ່ທະນາຄານອື່ນ	**232,019**	**793,561**
- ເປັນເງິນກີບ	52,445	93,390
- ເປັນເງິນຕາຕ່າງປະເທດ	179,574	700,171
ເງິນຝາກມີກຳນົດຢຸ່ທະນາຄານອື່ນ	**95,185**	**447,254**
- ເປັນເງິນກີບ	43,130	31,933
- ເປັນເງິນຕາຕ່າງປະເທດ	52,055	415,321
ອື່ນໆ	**13,720**	**4,802**
- ເປັນເງິນກີບ	4,222	1,554
- ເປັນເງິນຕາຕ່າງປະເທດ	9,498	3,248
	2,445,814	**2,855,689**
ດອກເບ້ຍຄ້າງຈ່າຍ	**533**	**6,036**
	2,446,347	**2,861,725**

22. ໜີ້ຕ້ອງສົ່ງລູກຄ້າ

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນຝາກກະແສລາຍວັນ	**4,515,881**	**4,308,911**
ເງິນຝາກກະແສລາຍວັນເປັນເງິນກີບ	2,178,278	1,319,640
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	2,337,603	2,989,271
ເງິນຝາກປະຢັດ	**8,591,522**	**7,544,224**
ເງິນຝາກປະຢັດເປັນເງິນກີບ	3,060,115	2,631,148
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	5,531,407	4,913,076
ເງິນຝາກກຳນົດ	**7,882,509**	**6,913,028**
ເງິນຝາກມີກຳນົດເປັນເງິນກີບ	5,502,892	4,847,213
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	2,379,617	2,065,815
ເງິນຝາກມັດຈຳ	**61,525**	**72,056**
ເງິນຝາກມັດຈຳເປັນເງິນກີບ	16,162	5,580
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	45,363	66,476
ເງິນຝາກອື່ນໆ	**202,651**	**242,084**
	21,254,088	**19,080,303**
ດອກເບ້ຍຄ້າງຈ່າຍ	**56,473**	**21,346**
	21,310,561	**19,101,649**

22. ໜີ້ຕ້ອງສົ່ງລູກຄ້າ (ຕໍ່)

ບັນຊີເງິນຝາກປະຢັດ ຈາກລູກຄ້າມີສະກຸນເງິນກີບ, ໂດລາ ແລະ ບາດ, ດອກເບ້ຍເລີ່ມແຕ່ 1.50% - 3.00%, 1.00% - 1.25% ແລະ 0.60% - 1.00% ຕໍ່ປີ, ຕາມລຳດັບ.

ເງິນຝາກປະຈຳ ສະກຸນເງິນກີບ, ໂດລາ, ບາດ ມີໄລຍະເວລາ 3, 6, 12 ເດືອນ ແລະ ຫຼາຍກວ່າ 1 ປີ ແລະ ມີອັດຕາດອກເບ້ຍ ແມ່ນ 2.25% – 12.50%, 1.15% - 6.75% ແລະ 0.75 – 6.50% ຕໍ່ປີ, ຕາມລຳດັບ.

23. ເງິນກູ້ຢືມຈາກທະນາຄານອື່ນ

	31 ທັນວາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	720,497	121,287
ດອກເບ້ຍຄ້າງຈ່າຍ	-	-
	720,497	**121,287**

ເງິນກູ້ຢືມຈາກ ທຫລ ລວມມີ:

- ເງິນກູ້ໄລຍະຍາວມູນຄ່າ 5,257,142 ໂດລາ (ຕົ້ນທຶນເງິນກູ້ທັງໝົດ 9,200,000 ໂດລາ) ເພື່ອລົງທຶນກັບທະນາຄານ ລາວ-ຝຣັ່ງ, ເລີ່ມຊຳລະແຕ່ປີ 2010 - 2023 ໃນອັດຕາດອກເບ້ຍ 0.25 % ຕໍ່ປີ. ການຊຳລະດອກເບ້ຍແມ່ນ ຊຳລະ 2 ຄັ້ງຕໍ່ປີ.
- ເງິນກູ້ໄລຍະຍາວ ມູນຄ່າ 83,354,000 ໂດລາ (ຕົ້ນທຶນເງິນກູ້ທັງໝົດ 100,000,000 ໂດລາ) ເພື່ອໃຫ້ສິນເຊື່ອໃຫ້ ແກ່ໂຄງການພະລັງງານນ້ຳຂອງລັດຖະບານ ໃນອັດຕາດອກເບ້ຍ 5.50% ຕໍ່ປີ.

24. ອາກອນ

24.1 *ອາກອນກຳໄລ*

ອົງປະກອບສຳຄັນຂອງລາຍຈ່າຍອາກອນສຳລັບປີ 2015 ແລະ 2014 ມີດັ່ງລຸ່ມນີ້:

	2015	*2014*
	ລ້ານກີບ	*ລ້ານກີບ*
ອາກອນກຳໄລພາຍໃນປີ	24,327	26,593
ອາກອນກຳໄລເຍື້ອນຊຳລະ	(1,950)	(3,788)
	22,377	**22,804**

24.2 *ໜີ້ຕ້ອງຈ່າຍອາກອນ*

	31 ທັນວາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສົ່ງອາກອນກຳໄລ	18,763	8,582
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	12,171	10,400
ໜີ້ຕ້ອງສົ່ງອາກອນອື່ນໆ	-	1,046
	30,934	**20,028**

24.3 *ອາກອນກຳໄລພາຍໃນປີ*

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນປີປັດຈຸບັນ ເຊິ່ງອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ. ທະນາຄານມີພັນທະຈ່າຍອາກອນໃນອັດຕາ 24% ຂອງກຳໄລກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນສະບັບປັບປຸງເລກທີ 05/ສພຊ ລົງວັນທີ 20 ທັນວາ 2011 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2013. ນອກຈາກນັ້ນແລ້ວ ເພື່ອໃຫ້ສອດຄ່ອງກັບລັດຖະບັນຍັດຂອງປະທານປະເທດ ສະບັບ ເລກທີ 001/ປປລ ລົງວັນທີ 28 ທັນວາ 2010, ອັດຕາອາກອນສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບແມ່ນຫຼຸດລົງ 5% ພາຍໃນຊ່ວງ 4 ປີທຳອິດ ເລີ່ມຈາກມື້ຈົດທະບຽນ.

ດັ່ງນັ້ນ ທະນາຄານ ແມ່ນໄດ້ເສຍພັນທະອາກອນໃນອັດຕາ 24% ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015 (2014: 19%). ບໍລິສັດໃນເຄືອ ແມ່ນຕ້ອງເສຍພັນທະອາກອນໃນອັດຕາ 24% ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2015 (2014: 24%).

24. ອາກອນ (ຕໍ່)

24.3 ອາກອນກຳໄລພາຍໃນປີ (ຕໍ່)

ລາຍລະອຽດກ່ຽວກັບອາກອນກຳໄລສຳລັບປີ 2014 ແລະ 2015 ມີດັ່ງລຸ່ມນີ້:

	2015	*2014*
	ລ້ານກີບ	*ລ້ານກີບ*
ກຳໄລລວມກິດຈະການກ່ອນຫັກອາກອນອີງຕາມ IFRS	**147,089**	**156,133**
ດັດແກ້ສຳລັບ:		
- ສ່ວນຜິດຕ່ຽງຍອດຍົກມາຕົ້ນທຶນຄ່າເຊື່ອມພັນທະບັດລະຫວ່າງ LAS ແລະ IFRS	(1,133)	11,434
- ເກັບຄືນຄ່າເຊື່ອມໜີ້ສູນຂອງຊັບສິນອື່ນໆ	-	(6,445)
- ສ່ວນຜິດຕ່ຽງເງິນແຮສຳລັບຄ່າເຊື່ອມໜີ້ເສຍເງິນກູ້ໃຫ້ທະນາຄານ ແລະ ລູກຄ້າ ລະຫວ່າງ LAS ແລະ IFRS	9,143	33,805
- ສ່ວນຜິດຕ່ຽງການຈັດສັນເງິນທຶນຊ່ວຍໜູນກໍ່ສ້າງພື້ນຖານ	356	(1,928)
- ສະສາງລາຍຈ່າຍກ່ອນການສ້າງຕັ້ງວິສາຫະກິດພາຍໃນປີ	(47)	69
- ສ່ວນຜິດຕ່ຽງລາຍຈ່າຍຄ່າເຊື່ອມໜີ້ເສຍຈາກການລົງທຶນລະຫວ່າງ LAS ແລະ IFRS	(1,837)	(27,237)
- ການດັດແກ້ກຳໄລທີ່ບໍ່ອະນຸຍາດໃຫ້ຫັກອາກອນທີ່ເກີດຈາກການລວມກິດຈະການ	(22,721)	(20,914)
- ລາຍຮັບທີ່ຖືກຍົກເວັ້ນຈາກອາກອນກຳໄລ	(38,020)	(26,588)
- ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍ	8,695	20,795
- ອື່ນໆ	(165)	-
ລາຍຮັບທີ່ຖືກຄິດໄລ່ອາກອນກຳໄລພາຍໃຕ້ LAS	**101,360**	**139,124**
ລວມມີ:		
- *ລາຍຮັບທີ່ຖືກຄິດໄລ່ອາກອນກຳໄລຂອງທະນາຄານແມ່*	*98,449*	*135,933*
- *ລາຍຮັບທີ່ຖືກຄິດໄລ່ອາກອນກຳໄລຂອງບໍລິສັດໃນເຄືອ*	*2,914*	*3,191*
ລາຍຈ່າຍອາກອນກຳໄລຂອງທະນາຄານແມ່ໃນອັດຕາ 24% (2014: 19%)	23,627	25,827
ລາຍຈ່າຍອາກອນກຳໄລຂອງບໍລິສັດໃນເຄືອໃນອັດຕາ 24% (2014: 24%)	700	766
ລາຍຈ່າຍອາກອນກຳໄລລວມກິດຈະການພາຍໃນປີ	**24,327**	**26,593**
ໜີ້ຕ້ອງສົ່ງອາກອນກຳໄລຕົ້ນປີ	8,582	12,819
ອາກອນກຳໄລທີ່ຈ່າຍໃນປີ	(9,020)	(30,830)
ໜີ້ຕ້ອງສົ່ງອາກອນເພີ່ມເຕີມສຳລັບປີຜ່ານມາ	165	-
ການດັດແກ້ອື່ນໆ	(5,291)	-
ໜີ້ຕ້ອງສົ່ງອາກອນກຳໄລທ້າຍປີ	**18,763**	**8,582**

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບ ທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ ໄດ້ສະແດງຢູ່ ໃນເອກະສານລາຍງານການເງິນລວມກິດຈະການ ອາດຈະຖືກປ່ຽນແປງຫຼັງຈາກມີໄຂ່ລຽງຂອງກົມສ່ວຍສາອາ ກອນ.

24. ອາກອນ (ຕໍ່)

24.4 ຊັບສິນ/(ໜີ້ສິນ) ອາກອນເຍື້ອນຊຳລະ

	ຊັບສິນອາກອນ ເຍື້ອນຊຳລະ	*ໜີ້ສິນອາກອນ ເຍື້ອນຊຳລະ*	*ຊັບສິນ/(ໜີ້ສິນ) ອາກອນເຍື້ອນ ຊຳລະສຸດທິ*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*
ນະວັນທີ 1 ມັງກອນ 2015	**5,999**	**(17,394)**	**(11,395)**
ເພີ່ມຂຶ້ນໃນປີ ເນື່ອງຈາກ:			
ສ່ວນປ່ຽນແປງໃນມູນຄ່າຍຸດຕິທຳຂອງ ການລົງທຶນການເງິນມີໄວ້ເພື່ອຂາຍ	(53)	4,680	4,627
ສ່ວນຕ່າງຊົ່ວຄາວລະຫວ່າງອາກອນກຳໄລພາຍໃຕ້ LAS ແລະ IFRS	313	1,637	1,950
ນະວັນທີ 31 ທັນວາ 2015	**6,259**	**(11,077)**	**(4,818)**

25. ໜີ້ສິນອື່ນໆ

	31 ທັນວາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ໜີ້ຕ້ອງສົ່ງພະນັກງານ	13,661	19,320
ໜີ້ຕ້ອງສົ່ງຜູ້ສະໜອງ	17,472	21,705
ຄ່າໃຊ້ຈ່າຍເມື່ອສິ້ນສຸດການຈ້າງງານ	14,537	11,202
ອື່ນໆ	14,703	164,158
	60,373	**216,385**

26. ທຶນຈົດທະບຽນ

ທຶນຈົດທະບຽນຂອງທະນາຄານ ໃນວັນທີ 31 ທັນວາ 2015 ແລະ ວັນທີ 31 ທັນວາ 2014 ມີດັ່ງຕໍ່ໄປນີ້:

	31 ທັນວາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ຍອດຍົກມາ	682,888	682,888
ຍອດເຫຼືອ	**682,888**	**682,888**

27. ຄັງສະສົມຕາມລະບຽບການ

	ຄັງສະສົມຕາມລະບຽບການ ລ້ານກີບ	*ຄັງຂະຫຍາຍທຸລະກິດ ລ້ານກີບ*	*ການເພີ່ມທຶນ ລ້ານກີບ*	*ລວມ ລ້ານກີບ*
ນະວັນທີ 1 ມັງກອນ 2015	**62,308**	**216,849**	**-**	**279,157**
ແບ່ງສ່ວນຄັງສະສົມໃນປີ 2014 ຈາກກຳໄລພາຍໃຕ້ລະບົບການບັນຊີລາວ ສຳລັບ ທຄຕລ	11,675	11,675	12,275	35,625
ແບ່ງສ່ວນຄັງສະສົມໃນປີ 2014 ຈາກກຳໄລພາຍໃຕ້ລະບົບການບັນຊີລາວ ສຳລັບ ບໍລິສັດໃຫ້ເຊົ່າສິນເຊື່ອ ທຄຕລ	-	116	-	116
ນະວັນທີ 31 ທັນວາ 2015	**73,983**	**228,640**	**12,275**	**314,898**

ພາຍໃຕ້ຂໍ້ກຳນົດຂອງກົດໝາຍກ່ຽວກັບທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດຖືກຮຽກຮ້ອງໃຫ້ແບ່ງປັນກຳໄລສຸດທິຂອງຕົນເອງໄວ້ເພື່ອ:

- ທຶນສຳຮອງຕາມລະບຽບການ
- ທຶນສຳລັບຂະຫຍາຍທຸລະກິດ

ຕາມລະບຽບຂອງທະນາຄານກາງກ່ຽວກັບຄວາມພຽງພໍຂອງທຶນ ສະບັບເລກທີ 01/ທຫຕ (BOL 01) ລົງວັນທີ 28 ສິງຫາ 2002 ອອກໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ, ບັນດາທະນາຄານທຸລະກິດຖືກຮຽກຮ້ອງໃຫ້ສະໜອງທຶນສຳຮອງຕາມລະບຽບການ ໃນອັດຕາຈາກ 5.00% ຫາ 10.00% ຫລື ຫລາຍກ່ວາຕາມກຳໄລຫລັງອາກອນຂຶ້ນກັບການຕັດສິນໃຈຂອງສະພາບໍລິຫານ. ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງຄະນະອຳນວຍການ.

28. ຄັງສຳຮອງສຳລັບຫຼັກຊັບມີໄວ້ເພື່ອຂາຍ

	31 ທັນວາ 2015 ລ້ານກີບ	*31 ທັນວາ 2014 ລ້ານກີບ*
ຍອດຍົກມາ	64,142	37,713
ປ່ຽນແປງສຸດທິໃນມູນຄ່າຍຸດຕິທຳຂອງການລົງທຶນທາງການເງິນສຳລັບຫຼັກຊັບມີໄວ້ເພື່ອຂາຍ	(31,081)	26,157
ການປ່ຽນແປງສຸດທິໃນມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນທີ່ມີໄວ້ເພື່ອຂາຍໃນຮຸ້ນຂອງບໍລິສັດຮ່ວມທຶນ	(272)	272
	32,789	**64,142**

29. ຂໍ້ມູນເພີ່ມເຕີມຂອງກະແສເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດລວມຢູ່ໃນໃບລາຍງານກະແສເງິນສົດລວມກິດຈະການ ເຊິ່ງປະກອບມີ ມູນຄ່າຂອງໃບລາຍງານຖານະການເງິນລວມກິດຈະການ ດັ່ງນີ້:

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	2,236,642	1,998,781
ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	6,095,242	4,322,473
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ	1,659,680	2,268,162
ເງິນຝາກມີກຳນົດທີ່ຄົບກຳນົດພາຍໃນ 3 ເດືອນ	162,779	1,491,751
	10,154,343	**10,081,167**

30. ໜີ້ສິນ ແລະ ຄຳໝັ້ນສັນຍາທີ່ອາດເກີດຂຶ້ນ

	31 ທັນວາ 2015 *ລ້ານກີບ*	*31 ທັນວາ 2014* *ລ້ານກີບ*
ໜັງສືຄ້ຳປະກັນທາງການເງິນ	252,765	136,113
ໜັງສືສິນເຊື່ອທີ່ຕ້ອງຊຳລະທັນທີ	850,007	1,408,294
ໜັງສືສິນເຊື່ອເຍື້ອນຊຳລະ	148,541	183,998
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ	6,226,584	1,552,822
ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ	55,080	-
	7,532,977	**3,281,227**

ການຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ່ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫລື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫລຸດ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ).

ຂໍ້ຜູກພັນຍັງບໍ່ໄດ້ຖືກຖອນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ໂດຍທົ່ວໄປ ຂໍ້ຜູກພັນມີມື້ຄົບກຳນົດທີ່ໄດ້ກຳນົດໄວ້ ຫລື ມີອັກ (ມາດຕາ) ສຳລັບໃນກໍລະນີຍົກເລີກສັນຍາ. ເນື່ອງຈາກ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດຈຶ່ງບໍ່ຈຳເປັນສະທ້ອນໃຫ້ເຫັນເຖິງຄວາມຮຽກຮ້ອງຕ້ອງການຂອງກະແສເງິນສົດ.

ເຖິງຢ່າງໃດກໍ່ຕາມ, ໂອກາດຄ່າເຊື່ອມໜີ້ເສຍຈະເກີດຂຶ້ນແມ່ນຕ່ຳກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ແມ່ນມີຄວາມສ່ຽງຫຼາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

30. ໜີ້ສິນ ແລະ ຄຳໝັ້ນສັນຍາທີ່ອາດເກີດຂຶ້ນ (ຕໍ່)

ສັນຍາເຊົ່າຊື້

ວັນທີ 31 ທັນວາ 2015, ທະນາຄານບໍ່ໄດ້ເຊັນສັນຍາເຊົ່າໃນນາມທີ່ເປັນທັງຜູ່ໃຫ້ເຊົ່າ ຫລື ຜູ່ເຊົ່າ ທີ່ຈະມີຜົນຕໍ່ການແສເງິນສິດເຂົ້າ - ອອກໃນອະນາຄົດ.

31. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ການເຄື່ອນໄຫວທີ່ກ່ຽວຂ້ອງກັບບຸກຄົນທີ່ສຳຄັນຕໍ່ການບໍລິຫານຂອງທະນາຄານ

ເງິນຕອບແທນໃຫ້ແກ່ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການມີດັ່ງນີ້:

	2015 *ລ້ານກີບ*	*2014* *ລ້ານກີບ*
ເງິນເດືອນ	1,648	1,398
ເງິນໂບນັດ	363	442
ເງິນນະໂຍບາຍຄວາມຮັບຜິດຊອບ	1,176	1,054
	3,187	**2,894**

ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງອື່ນໆ

ພາຍໃນປີທະນາຄານໄດ້ຂາຍສິດນຳໃຊ້ທີ່ດິນ 36 ຕອນໃຫ້ ທະນາຄານແຫ່ງ ສປປ ລາວ ໃນມູນຄ່າ 374,970 ລ້ານກີບ. ລາຄາຂາຍແມ່ນອີງຕາມການຕີກລົງເຫັນດີຂອງທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ຈາກລາຍການດັ່ງກ່າວເຮັດໃຫ້ມີກຳໄລ 355,022 ລ້ານກີບ ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບລວມກິດຈະການສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2015.

31. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງອື່ນໆ (ຕໍ່)

ຍອດເຫຼືອກັບຝ່າຍທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2015 ມີດັ່ງຕໍ່ໄປນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ການເຄື່ອນໄຫວ*	*ໜີ້ຕ້ອງຮັບ ລ້ານກີບ*	*ໜີ້ຕ້ອງສົ່ງ ລ້ານກີບ*
ທະນາຄານ ແຫ່ງ ສປປ ລາວ	ຜູ່ຄວບຄຸມໂດຍກົງ	ເງິນກູ້ຢືມ ແລະ ດອກເບ້ຍ ຄ້າງຈ່າຍຈາກ ທຫລ	-	720,497
ທະນາຄານ ແຫ່ງ ສປປ ລາວ	ຜູ່ຄວບຄຸມໂດຍກົງ	ເງິນຝາກກະແສລາຍວັນ ຂອງ ທຄຕລ ຢູ່ ທຫລ	6,095,242	-
ທະນາຄານ ແຫ່ງ ສປປ ລາວ	ຜູ່ຄວບຄຸມໂດຍກົງ	ເງິນຝາກພາກບັງຄັບ ຂອງ ທຄຕລ ຢູ່ ທຫລ	1,134,906	-
ກະຊວງ ການເງິນແຫ່ງ ສປປ ລາວ	ເປັນເຈົ້າຂອງໂດຍກົງ	ລົງທຶນໃນພັນທະບັດຂອງ ກະຊວງການເງິນ	1,776,408	-
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	31,962
ທະນາຄານ ລາວ-ຝຣັ່ງ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	54,191
ທະນາຄານ ລາວ-ຈີນ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສລາຍວັນ	-	129,465
ບໍລິສັດKT-Zmico Securities Co., Ltd	ຮຸ້ນສາມັນກັບ BCEL KT	ຕ້ອງສົ່ງຄ່າບໍລິການ	-	974

32. ນະໂຍບາຍບໍລິຫານຄວາມສ່ຽງ

ຄຳນຳ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກຳຂອງທະນາຄານ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງທະນາຄານ ແລະ ແຕ່ລະສະພາບຄ່ອງພາຍໃນ. ທະນາຄານແມ່ນຕ້ອງຮັບຜິດຊອບໃນການເປີດເຜີຍຄວາມສ່ຽງ.

ຈຸດປະສົງສຳຄັນຂອງທະນາຄານໃນການບໍລິຫານຄວາມສ່ຽງແມ່ນເພື່ອໃຫ້ສອດຄ່ອງກັບລະບຽບຂອງທະນາຄານກາງ. ແລະ ອີກເຫດຜົນໜຶ່ງແມ່ນຍ້ອນທະນາຄານໄດ້ຮັບຮູ້ເຖິງຄວາມສຳຄັນຂອງການບໍລິຫານຄວາມສ່ຽງເພື່ອໃຫ້ສອດຄ່ອງຕາມການປະຕິບັດຂອງມາດຕະຖານສາກົນທີ່ດີທີ່ສຸດໃນການບໍລິຫານຄວາມສ່ຽງ. ສະພາບໍລິຫານ ແລະ ຄະນະອຳນວຍການ, ພ້ອມດ້ວຍການສະໜັບສະໜຸນຈາກຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ກຳນົດຕົວຜັນແປທີ່ຊັດເຈນຂອງຄວາມສ່ຽງທີ່ສາມາດຍອມຮັບໄດ້ຂອງທະນາຄານ ແລະ ຄວບຄຸມການປະຕິບັດທີ່ກົງກັນຂ້າມກັບຕົວຜັນແປນີ້.

ທະນາຄານມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ ແລະ ຫລັງຈາກນັ້ນ ໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ທະນາຄານຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງທະນາຄານແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງທະນາຄານ.

32. ນະໂຍບາຍບໍລິຫານຄວາມສ່ຽງ (ຕໍ່)

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດກົນລະຍຸດ ແລະ ຫລັກການບໍລິຫານຄວາມສ່ຽງ.

ສະພາໄດ້ແຕ່ງຕັ້ງຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມ ການຈັດການຄວາມສ່ຽງໂດຍລວມຂອງທະນາຄານ.

ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫລັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງທະນາຄານແມ່ນຂັ້ນຕອນການຈັດການຄວາມສ່ຽງໂດຍທີ່ທະນາຄານໄດ້ຖືກກວດສອບປະຈຳປີ. ເຊິ່ງຜ່ານການກວດສອບນີ້ຈະຮູ້ໄດ້ວ່າທະນາຄານສາມາດປະຕິບັດໄດ້ຕາມຂັ້ນຕອນທີ່ວາງໄວ້ຫລືບໍ່. ພະແນກກວດກາພາຍໃນໄດ້ປຶກສາຫາລືຜົນຂອງການປະເມີນຄວາມສ່ຽງ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດກາ.

33. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສຳຮອງຕ່ຳສຸດຕາມລະບຽບການເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າ ທະນາຄານໄດ້ປະ ຕິບັດຕາມຄວາມຂໍ້ກຳນົດທາງດ້ານເງິນທຶນຂອງທະນາຄານກາງ. ທະນາຄານຮັບຮູ້ເຖິງຄວາມຈຳເປັນຂອງທະນາຄານເພື່ອຮັກສາການບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກຳໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານກາງຖືກວິເຄາະເປັນ 2 ລະດັບຄື:

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກຳໄລລໍ້ຖ້າແບ່ງປັນ;
- ທຶນຊັ້ນ 2 ແມ່ນມູນຄ່າທີ່ສູງກວ່າຂອງ: 1.25% ຂອງຍອດລວມຄວາມສ່ຽງຂອງລາຍການໃນໃບສະຫຼຸບຊັບສົມບັດ ແລະ ຍອດເຫຼືອຂອງເງິນແຮທົ່ວໄປພາຍໃນປີ

ຂອບເຂດຕ່າງໆແມ່ນຖືກນຳໃຊ້ເພື່ອເປັນອົງປະກອບຂອງທຶນອົງໃສ່: ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນສຳຮອງບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

33. ການບໍລິຫານທຶນ (ຕໍ່)

ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນລວມກິດຈະການ ຕາມມາດຕະຖານສາກົນດ້ານການລາຍງານການເງິນ ເຊິ່ງມີດັ່ງຕໍ່ໄປນີ້ :

	31 ທັນວາ 2015	*31 ທັນວາ 2014*
	ລ້ານກີບ	*ລ້ານກີບ*
ທຶນຊັ້ນ 1	1,132,051	1,117,789
ທຶນຊັ້ນ 2	14,877	-
ລວມທຶນ	1,146,928	1,117,789
ລົບ : ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ)	(555,418)	(534,430)
ທຶນສຳລັບການຄິດໄລ່ CAR (A)	**591,510**	**583,359**
ຄວາມສ່ຽງສຳຄັນຢູ່ໃນສະຫລຸບຊັບສິນບັດ	6,810,241	6,457,127
ຄວາມສ່ຽງສຳຄັນຢູ່ລາຍການນອກໃນສະຫລຸບຊັບສິນບັດ	3,738,949	864,203
ລວມຄວາມສ່ຽງສຳຄັນຢູ່ຊັບສິນ (B)	**10,549,190**	**7,321,330**
ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)	**5.60%**	**7.97%**

34. ມູນຄ່າຍຸດຕິທຳຂອງ ຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸດຕິທຳໝາຍເຖິງ ມູນຄ່າຊັບສິນທີ່ສາມາດແລກປ່ຽນເປັນເງິນ ຫລື ການຊຳລະໜີ້ສິນບົນພື້ນຖານລາຍການເຄື່ອນໄຫວໃນເງື່ອນໄຂແກ້ງແຍ້ງປົກກະຕິ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫລາດ, ຊັບສິນ ແລະ ໜີ້ສິນ ຂອງທະນາຄານຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫລາດໄດ້. ດັ່ງນັ້ນ, ມູນຄ່າຍຸດຕິທຳຈຶ່ງຖືກປະເມີນແບບສົມມຸດຕິຖານອີງຕາມລັກສະນະຂອງຊັບສິນ ແລະ
ໜີ້ສິນ. ຕາມຄຳເຫັນຂອງຄະນະບໍລິຫານ, ໃຫ້ຍົກເວັ້ນ ພັນທະບັດທີ່ ທີ່ອອກໂດຍກະຊວງ ການເງິນ ແລະ ເງິນທີ່ກູ້ຢືມຈາກທຫລ, ມູນຄ່າຍັງເຫລືອ ຂອງ ບັນຊີຊັບສິນ ແລະ ໜີ້ສິນ ທີ່ລວມເຂົ້າໄວ້ໃນໃບລາຍງານຖານະການເງິນລວມກິດຈະການ ແມ່ນຖືກຄາດຄະເນດ້ວຍມູນຄ່າທີ່ສົມເຫດສົມຜົນ ກັບ ມູນຄ່າຍຸດຕິທຳ. ໃນການປະເມີນດັ່ງກ່າວ, ຄະນະບໍລິຫານຂອງທະນາຄານ ສົມມຸດຖານວ່າ ເງິນກູ້ສ່ວນໃຫຍ່ຖືຈັດປົບກຳນົດ ເຊິ່ງມູນຄ່າຍຸດຕິທຳເທົ່າກັບມູນຄ່າຕາມບັນຊີຂອງເງິນກູ້ທີ່ຖືກດັດແກ້ເງິນແຮຈາກການຫັກຄ່າເຊື່ອມ.

35. ລາຍໄດ້ຕໍ່ຮຸ້ນ

ມູນຄ່າຂອງລາຍໄດ້ຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກຳໄລຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນໄຕມາດ 1.

ລາຍການດັ່ງລຸ່ມນີ້ສົ່ງຜົນກະທົບຕໍ່ລາຍໄດ້ ແລະ ຂໍ້ມູນຮຸ້ນທີ່ໃຊ້ເຂົ້າໃນການຄິດໄລ່ລາຍໄດ້ຕໍ່ຮຸ້ນ.

	2015	*2014*
ສຸດທິຫຼັງຫັກອາກອນທີ່ຄາດວ່າຈະຕ້ອງໄດ້ຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນບົນພື້ນຖານລາຍໄດ້ຕໍ່ຮຸ້ນທົ່ວໄປ (ລ້ານກີບ)	124,371	132,610
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບລາຍໄດ້ຕໍ່ຮຸ້ນ ບົນພື້ນຖານທົ່ວໄປ (ຫົວໜ່ວຍ)	136,577,600	136,577,600
ມູນຄ່າຕໍ່ຮຸ້ນ (ກີບ)	5,000	5,000
ລາຍໄດ້ຕໍ່ຮຸ້ນ (ກີບ)	911	971

36. ເຫດການທີ່ເກີດຂຶ້ນພາຍຫລັງວັນທີອອກເອກະສານລາຍງານການເງິນ

ນອກຈາກບັນຫາທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນລວມກິດຈະການສະບັບນີ້, ນະມ໊ເຮັດບົດລາຍງານ, ບໍ່ມີເຫດການໃດເກີດຂຶ້ນຫລັງຈາກ ວັນທີ 31 ທັນວາ 2015 ທີ່ມີຜົນກະທົບສຳຄັນຕໍ່ເອກະສານຖານະການເງິນລວມກິດຈະການ ຂອງ ທະນາຄານ ນະວັນທີ 31 ທັນວາ 2015.

37. ອັດຕາແລກປ່ຽນນຳໃຊ້ກັບສະກຸນເງິນຕ່າງປະເທດ ທຽບເທົ່າເງິນກີບລາວໃນທ້າຍປີ

	31/12/2015	*31/12/2014*
	ກີບ	*ກີບ*
USD	8131.00	8,080.00
EUR	8,871.00	9,790.00
THB	226.06	246.55
GBP	11,864.00	12,323.00
CHF	7,829.00	7,940.00
JPY	66.33	65.91
SGD	5,845.00	6,182.00
CAD	5,610.00	6,753.00
AUD	5,830.00	6,454.00
CNY	1,180.00	1288.00
VND	0.36	0.38

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີແສງ ໄຊຍະເພັດ	ທ່ານ ນ. ພູແສງທອງ ອານຸລັກຄຳ	ທ່ານ ພັນຊະນະ ຄຸນນຸວົງ
ຫົວໜ້າພະແນກບັນຊີສັງລວມ	ອຳນວຍການຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2016